# ເອກະສານຂໍ້ມູນບໍລິການ EARLY START

*ສະບັບແກ້ໄຂປັບປຸງ: ສິງຫາ 2025*



Department of Developmental Services

# ສາລະບັນ


ຍິນດີຕ້ອນຮັບສູ່ການບໍລິການ EARLY START .......... 5

ຊຸດເອກະສານນີ້ແມ່ນສໍາລັບໃຜ? .......... 7

ພາກສ່ວນທີ່ 1: ຂໍ້ມູນທົ່ວໄປ .......... 8

ຄວາມລ່າຊ້າດ້ານພັດທະນາການແມ່ນຫຍັງ? .......... 8

ຄວາມພິການດ້ານພັດທະນາການແມ່ນຫຍັງ? .......... 8

ບໍລິການ Early Start ແມ່ນຫຍັງ? .......... 9

ກົດໝາຍ Lanterman Act ແມ່ນຫຍັງ? .......... 9

ພະແນກບໍລິການດ້ານພັດທະນາການແມ່ນໃຜ? .......... 10

ສູນເຣຈິນັລແມ່ນຫຍັງ? .......... 10

ບຸກຄົນໃດທີ່ມີຄຸນສົມບັດໃນການໄດ້ຮັບບໍລິການ Early Start? .......... 12

ການມີສິດຊົ່ວຄາວແມ່ນຫຍັງ? .......... 13

ບໍລິການ Early Start ສາມາດຊ່ວຍລູກຂອງຂ້າພະເຈົ້າໄດ້ແນວໃດ? .......... 14

ຂ້າພະເຈົ້າຈະໄດ້ຮັບການບໍລິການປະເພດໃດແດ່ຈາກບໍລິການ Early Start? .......... 15

ຂ້າພະເຈົ້າຈະຕ້ອງເສຍຄ່າໃຊ້ຈ່າຍສໍາລັບບໍລິການ Early Start ບໍ? .......... 16

ພາກສ່ວນທີ່ 2: ການຍື່ນສະໝັກຂໍຮັບບໍລິການ EARLY START .......... 17

ຂ້າພະເຈົ້າຄິດວ່າລູກຂອງຂ້າພະເຈົ້າມີພາວະ ຫຼື ຄວາມລ່າຊ້າດ້ານພັດທະນາການທີ່ອາດຈະຕ້ອງໄດ້ຮັບບໍລິການແຊກແຊງແຕ່ເລີ່ມຕົ້ນ. ຂ້າພະເຈົ້າຈະເຮັດແນວໃດ? .......... 17

ຂ້າພະເຈົ້າຈະປຶກສາຫາລືກ່ຽວກັບຄວາມກັງວົນຂອງຂ້າພະເຈົ້າກັບແພດ ຫຼື ກັບສູນເຣຈິນັລໃນພື້ນທີ່ຂອງຂ້າພະເຈົ້າໄດ້ແນວໃດ? .......... 17

ມີຂໍ້ມູນທີ່ເປັນປະໂຫຍດທີ່ຂ້າພະເຈົ້າຄວນແບ່ງປັນກັບສູນເຣຈິນັລບໍ? .......... 18

ຈະເກີດຫຍັງຂຶ້ນເມື່ອຂ້າພະເຈົ້າໂທຫາສູນເຣຈິນັລ? .......... 19

ມີບຸກຄົນອື່ນທີ່ສາມາດຊ່ວຍເຫຼືອຂ້າພະເຈົ້າໄດ້ບໍ? .......... 21

ລູກຂອງຂ້າພະເຈົ້າບໍ່ມີສິດໄດ້ຮັບການບໍລິການ Early Start ໃນເວລານີ້. ຂ້າພະເຈົ້າມີທາງເລືອກຫຍັງແດ່?.............23

ພາກສ່ວນທີ່ 3: ການນຳທາງບໍລິການ EARLY START ....................24

ລູກຂອງຂ້າພະເຈົ້າມີສິດໄດ້ຮັບການບໍລິການ Early Start. ຈະເກີດຫຍັງຂຶ້ນຕໍ່ໄປ?....................24

ຜູ້ປະສານງານບໍລິການ Early Start ສາມາດຊ່ວຍເຫຼືອຂ້າພະເຈົ້າໄດ້ແນວໃດ?....................24

ແຜນບໍລິການຄອບຄົວສະເພາະບຸກຄົນ (IFSP) ແມ່ນຫຍັງ? ....................25

IFSP ພັດທະນາຂຶ້ນໄດ້ແນວໃດ?....................25

ບໍລິການຕ່າງໆຈະໄດ້ຮັບການກຳນົດແນວໃດ?....................26

IFSP ສາມາດປ່ຽນແປງໄດ້ບໍ? ....................26

ຂັ້ນຕອນ IFSP ຕາມລຳດັບເວລາຈະເປັນແນວໃດ? ....................26

ເປັນຫຍັງການລົງນາມໃນ IFSP ຈຶ່ງມີຄວາມສຳຄັນ?....................27

ພາກສ່ວນທີ່ 4: ຕັ້ງແຕ່ບໍລິການ EARLY START ຈົນຮອດຊ່ວງເຂົ້າໂຮງຮຽນ....................29

ຄອບຄົວຂອງຂ້າພະເຈົ້າອາດຈະໄດ້ຮັບການສະໜັບສະໜູນຫຍັງແດ່ເມື່ອລູກຂອງຂ້າພະເຈົ້າອາຍຸຄົບ 3 ປີ?.............29

ຂ້າພະເຈົ້າຈະວາງແຜນການປ່ຽນຜ່ານອອກຈາກບໍລິການ Early Start ໄດ້ແນວໃດ? ....................29

ພາກສ່ວນທີ່ 5: ຮູ້ຈັກສິດທິຂອງທ່ານ....................32

ສິດທິຂອງຂ້າພະເຈົ້າໃນຖານະທີ່ເປັນພໍ່ແມ່ ຫຼື ຜູ້ດູແລແມ່ນຫຍັງ? ....................32

ບຸກຄົນໃດສາມາດຊ່ວຍເຫຼືອຂ້າພະເຈົ້າໃນການອຸທອນ ຫຼື ການຮ້ອງຮຽນ? ....................37

ພາກສ່ວນທີ່ 6: ຂໍ້ມູນການຕິດຕໍ່ ແລະແຫຼ່ງຊັບພະຍາກອນ....................39

ຂໍ້ມູນການຕິດຕໍ່ ....................39

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບບໍລິການ Early Start ....................42

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເດັກໄວເຂົ້າຮຽນ ແລະການບໍລິການສຳລັບຜູ້ໃຫຍ່ ....................45

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການດູແລສຸຂະພາບແລະສັງຄົມສົງເຄາະ....................47

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານ ....................48

ຄຳສັບ ....................50

**ບັນທຶກກ່ຽວກັບສະບັບຕີພິມ:**

ຖ້າທ່ານພິມຊຸດເອກະສານຂໍ້ມູນນີ້ ທ່ານສາມາດເຂົ້າເຖິງລິ້ງເວັບໄຊທັງໝົດໄດ້ເຊັ່ນກັນ.
ເມື່ອທ່ານເຫັນລິ້ງເວັບໄຊທີ່ມີຂີດກ້ອງສີຟ້າ ທ່ານກໍ່ຈະເຫັນສີ່ຫຼ່ຽມສີດໍາທີ່ເອີ້ນວ່າລະຫັດຕອບກັບດ່ວນ (QR Code).
ສາມາດສະແກນລະຫັດ QR Code ໄດ້ໂດຍໃຊ້ກ້ອງຖ່າຍຮູບໃນໂທລະສັບມືຖື ຫຼື ໃນແທັບເລັດຂອງທ່ານ. ເມື່ອທ່ານສະແກນລະຫັດ QR Code ທ່ານຈະສາມາດເຂົ້າເບິ່ງເວັບໄຊທີ່ກ່ຽວຂ້ອງກັບລະຫັດ QR Code ນັ້ນໄດ້.
ປະຕິບັດຕາມຄໍາແນະນໍາຂ້າງລຸ່ມນີ້ສໍາລັບວິທີໃຊ້ລະຫັດ QR Code.

1. ເປີດແອັບກ້ອງຖ່າຍຮູບໃນໂທລະສັບມືຖື ຫຼື ໃນແທັບເລັດຂອງທ່ານ.
2. ຖືກ້ອງຖ່າຍຮູບຂອງທ່ານເທິງຮູບສີ່ຫຼ່ຽມ.
3. ກວດສອບໃຫ້ແນ່ໃຈວ່າທ່ານສາມາດເຫັນ QR Code ໃນໜ້າຈໍຂອງທ່ານ.
4. ລິ້ງເຊື່ອມຕໍ່ໄປທີ່ເວັບໄຊຈະປາກົດທີ່ໜ້າຈໍຂອງທ່ານ.
5. ແຕະທີ່ລິ້ງເພື່ອໄປທີ່ເວັບໄຊ.

ເມື່ອທ່ານສະແກນລະຫັດ QR Code ນີ້ ທ່ານສາມາດໄປທີ່ ເວັບໄຊທີ່ມີຊຸດເອກະສານຂໍ້ມູນບໍລິການ Early Start ສະບັບຫຼ້າສຸດ:

SCAN ME

# ຍິນດີຕ້ອນຮັບສູ່ການບໍລິການ EARLY START

ແອນ້ອຍແລະເດັກນ້ອຍໄວຫັດເດີນທຸກຄົນມີພັດທະນາການທີ່ແຕກຕ່າງກັນໄປໃນທາງທີ່ດີທີ່ສຸດ. ພວກເຮົາຮູ້ວ່າພໍ່ແມ່ມີຄຳຖາມກ່ຽວກັບການພັດທະນາການຂອງລູກຂອງເຂົາເຈົ້າ.  ບໍລິການ Early Start ສ້າງຂື້ນເພື່ອສະໜັບສະໜູນເດັກນ້ອຍເຊັ່ນລູກຂອງທ່ານໃນ 3 ປີທຳອິດຂອງຊີວິດ.  ຈຸດປະສົງອື່ນໆຂອງບໍລິການນີ້ແມ່ນເພື່ອສະໜັບສະໜູນພໍ່ແມ່ທີ່ຮັກແພງ ແລະຜູ້ດູແລເຊັ່ນດຽວກັນກັບທ່ານ.

ບໍລິການ Early Start ຈະຊ່ວຍໃຫ້ທ່ານໃຊ້ 3 ປີທຳອິດໃນຊີວິດຂອງລູກທ່ານໄດ້ຢ່າງມີປະໂຫຍດສູງສຸດ. ເຊິ່ງຈະຊ່ວຍໃຫ້ທ່ານຕອບສະໜອງຄວາມຕ້ອງການທີ່ສະເພາະຂອງລູກຂອງທ່ານ. ແລະຍັງສາມາດຊ່ວຍໃຫ້ລູກຂອງທ່ານຮຽນຮູ້ທັກສະທີ່ທ່ານຄິດວ່າສຳຄັນທີ່ສຸດ.

ການເປັນພໍ່ແມ່ຂອງເດັກນ້ອຍອາດຈະເປັນເລື່ອງຍາກ.  ຖ້າທ່ານເປັນຫ່ວງກ່ຽວກັບພັດທະນາການຂອງແອນ້ອຍທ່ານອາດຈະຮູ້ສຶກກັງວົນໄດ້ງ່າຍ.  ຂ່າວດີແມ່ນແອນ້ອຍຂອງທ່ານຍັງເປັນແອນ້ອຍຄົນເກົ່າທີ່ທ່ານພາມາຈາກໂຮງໝໍ. ທ່ານຮູ້ຈັກລູກຂອງທ່ານຫຼາຍກວ່າຄົນອື່ນໃນໂລກ.  ບໍລິການ Early Start ຈັດຫາຊ່ອງທາງຕິດຕໍ່ທີ່ເປັນມິດກັບຄອບຄົວ ເພື່ອໃຫ້ທ່ານສາມາດສອບຖາມວ່າແອນ້ອຍ ຫຼືລູກໄວຫັດເດີນຂອງທ່ານຈຳເປັນຕ້ອງໄດ້ຮັບຄວາມຊ່ວຍເຫຼືອ ຫຼື ບໍ່. ແລະບໍລິການນີ້ຍັງຈະຊ່ວຍໃຫ້ທ່ານໄດ້ຮັບບໍລິການສຳລັບແອນ້ອຍ ຫຼືເດັກໄວຫັດເດີນຂອງທ່ານໃນການພັດທະນາດ້ວຍວິທີທີ່ດີທີ່ສຸດ.  ບໍລິການນີ້ຈະເຊື່ອມໂຍງທ່ານກັບພໍ່ແມ່ຄົນອື່ນເຊັ່ນດຽວກັບຕົວທ່ານເອງ.  ທ່ານສາມາດສ້າງທີມງານຜູ້ຊ່ຽວຊານທີ່ຈະຊ່ວຍໃຫ້ທ່ານສະໜັບສະໜູນການເຕີບໃຫຍ່ແລະພັດທະນາການຂອງລູກຂອງທ່ານ.



ເປັນເລື່ອງທຳມະດາທີ່ເດັກນ້ອຍຈະມີພັດທະນາການຊ້າກວ່າປົກກະຕິ.  ເດັກນ້ອຍປະມານ 1 ໃນທຸກ 6 ຄົນໃນສະຫະລັດອາເມຣິກາ ມີພັດທະນາການລ່າຊ້າ.  ບໍລິການ Early Start ຊ່ວຍເຫຼືອເດັກອ່ອນ ແລະເດັກໄວຫັດເດີນ ເລີ່ມແຕ່ເກີດຫາ 3 ປີ ຜູ້ທີ່ມີການພັດທະນາລ່າຊ້າ ຫຼື ມີຄວາມພິການ.  ບໍລິການ Early Start ສາມາດຊ່ວຍໃຫ້ທ່ານເຂົ້າໃຈຫຼາຍຂຶ້ນກ່ຽວກັບຄວາມຈຳເປັນໃນການຮຽນຮູ້, ເຕີບໃຫຍ່ ແລະພັດທະນາການຂອງລູກທ່ານໄດ້ດີຂຶ້ນ.  ບໍລິການ Early Start ມີຈຸດປະສົງເພື່ອຊ່ວຍໃຫ້ເດັກນ້ອຍທີ່ມີສິດຮຽນຮູ້ທັກສະໃໝ່, ເອົາຊະນະຄວາມທ້າທາຍ ແລະເພີ່ມຄວາມສຳເລັດໃນຊີວິດ.

ຖ້າທ່ານ ຫຼື ແພດຂອງທ່ານຄິດວ່າລູກຂອງທ່ານອາດຈະມີຄວາມພິການ ຫຼື ມີພັດທະນາການລ່າຊ້າ ຂໍ້ມູນນີ້ຈະຊ່ວຍໃຫ້ທ່ານຮຽນຮູ້ກ່ຽວກັບບໍລິການ Early Start.

ທ່ານສາມາດຊອກຫາຄໍາຕອບເພີ່ມເຕີມໄດ້ໃນ ຄໍາຖາມທີ່ພົບເລື້ອຍໆກ່ຽວກັບບໍລິການ Early Start.

# ຊຸດເອກະສານນີ້ແມ່ນສຳລັບໃຜ?

ຊຸດເອກະສານນີ້ແມ່ນສຳລັບພໍ່ແມ່ແລະຜູ້ດູແລຄົນອື່ນຂອງເດັກອ່ອນແລະເດັກນ້ອຍໄວຫັດເດີນທີ່ອາດມີ ຫຼື ຮູ້ວ່າມີພັດທະນາການລ່າຊ້າ ຫຼື ມີຄວາມພິການ.

ຜູ້ຊ່ຽວຊານ ແລະບຸກຄົນອື່ນສາມາດໃຊ້ຂໍ້ມູນນີ້ເພື່ອຊ່ວຍສະໜັບສະໜູນຄອບຄົວ ແລະລູກນ້ອຍຂອງເຂົາເຈົ້າ.

**ການໃຊ້ຄູ່ມືນີ້**

ຄູ່ມືນີ້ແບ່ງອອກເປັນຫົກພາກສ່ວນເພື່ອໃຫ້ໃຊ້ງານໄດ້ງ່າຍຂຶ້ນ.

ທ່ານສາມາດເລີ່ມຕົ້ນອ່ານໃນພາກສ່ວນໃດກໍ່ໄດ້ຕາມຄວາມສົນໃຈຂອງທ່ານ.


ພາກສ່ວນທີ່ 1: ຂໍ້ມູນທົ່ວໄປ

ພາກສ່ວນທີ່ 2: ການຍື່ນສະໝັກຂໍຮັບບໍລິການ Early Start

ພາກສ່ວນທີ່ 3: ການນຳທາງບໍລິການ Early Start

ພາກສ່ວນທີ່ 4: ຕັ້ງແຕ່ບໍລິການ Early Start ຈົນຮອດຊ່ວງເຂົ້າໂຮງຮຽນ

ພາກສ່ວນທີ່ 5: ຮູ້ຈັກສິດທິຂອງທ່ານ

ພາກສ່ວນທີ່ 6: ຂໍ້ມູນການຕິດຕໍ່ ແລະແຫຼ່ງຊັບພະຍາກອນ




# ພາກສ່ວນທີ່ 1: ຂໍ້ມູນທົ່ວໄປ

**ຄວາມລ່າຊ້າດ້ານພັດທະນາການແມ່ນຫຍັງ?**
ຄວາມລ່າຊ້າດ້ານພັດທະນາການແມ່ນເປັນເລື່ອງປົກກະຕິ. ເດັກນ້ອຍ 1 ໃນ 6 ຄົນມີຄວາມລ່າຊ້າ. ເດັກນ້ອຍພັດທະນ າທັກສະທີ່ແຕກຕ່າງກັນໄປໃນແຕ່ລະຊ່ວງເວລາ. ຖ້າເດັກນ້ອຍຄົນໃດບໍ່ສາມາດເຮັດສິ່ງທີ່ເດັກນ້ອຍສ່ວນໃຫຍ່ສາມາດເ ຮັດໄດ້ໃນໄວໃດໜຶ່ງ ເຂົາເຈົ້າອາດຈະມີຄວາມລ່າຊ້າດ້ານພັດທະນາການ.

ຄວາມລ່າຊ້າດ້ານພັດທະນາການອາດເກີດຂຶ້ນໄດ້ໃນໜຶ່ງ ຫຼື ໃນຫຼາຍດ້ານດັ່ງຕໍ່ໄປນີ້:

- ການຄິດ ແລະການຮຽນຮູ້ (ສະຕິປັນຍາ)
- ການປາກເວົ້າແລະການສະແດງອອກ (ການສື່ສານແບບສະແດງອອກ)
- ຄວາມເຂົ້າໃຈພາສາ (ການສື່ສານແບບຮັບຮູ້)
- ຄວາມຮູ້ສຶກ, ການສະແດງອອກ ແລະການພົວພັນກັບຄົນອື່ນ (ທາງສັງຄົມແລະອາລົມ)
- ທັກສະການດຳລົງຊີວິດປະຈຳວັນ ເຊັ່ນ: ການກິນ, ການແຕ່ງຕົວ, ການດູແລຕົນເອງ (ແບບປັບຕົວ)
- ການຍ່າງ, ການເຄື່ອນໄຫວ, ການມອງເຫັນແລະການໄດ້ຍິນ (ພັດທະນາການດ້ານຮ່າງກາຍແລະການເຄື່ອນໄຫວ ລວມທັງການມອງເຫັນແລະການໄດ້ຍິນ)



**ຄວາມພິການດ້ານພັດທະນາການແມ່ນຫຍັງ?**
ຄວາມລ່າຊ້າດ້ານພັດທະນາການອາດເປັນສັນຍານຂອງຄວາມພິການດ້ານພັດທະນາການໄດ້ເຊັ່ນກັນ. ໃນລັດຄາລິຟໍເນຍ ຄວາມພິການດ້ານພັດທະນາການຖືວ່າເປັນຕະຫຼອດຊີວິດ ແລະຕ້ອງມີພາວະກ່ອນອາຍຸ 18 ປີ.
ພາວະຕໍ່ໄປນີ້ຖືວ່າເປັນຄວາມພິການດ້ານພັດທະນາການ:

- ພາວະອໍທິສຕິກ
- ສະໝອງພິການ
- ພະຍາດບ້າໝູ
- ຄວາມພິການທາງສະຕິປັນຍາ
- ພາວະອື່ນໆທີ່ຕ້ອງໄດ້ຮັບການປິ່ນປົວຄ້າຍຄືກັນກັບບຸກຄົນທີ່ມີຄວາມພິການທາງສະຕິປັນຍາ ເຊິ່ງບໍ່ພຽງແຕ່ຄວມພິການດ້ານການຮຽນຮູ້, ສຸຂະພາບຈິດ ຫຼື ຄວາມພິການທາງຮ່າງກາຍເທົ່ານັ້ນ.

**ບໍລິການ Early Start ແມ່ນຫຍັງ?**
ບໍລິການ Early Start ແມ່ນລະບົບທີ່ໃຫ້ບໍລິການແຊກແຊງໃນໄລຍະເລີ່ມຕົ້ນໃນລັດຄາລິຟໍເນຍສໍ າລັບຄອບຄົວທີ່ມີເດັກອ່ອນ ແລະເດັກໄວທັດເດີນທີ່ມີຄວາມລ່າຊ້າດ້ານພັດທະນາການ ຫຼື ມີຄວາມພິການ.

ບໍລິການແຊກແຊງໃນໄລຍະເລີ່ມຕົ້ນຊ່ວຍໃຫ້ແອນ້ອຍແລະເດັກໄວທັດເດີນຮຽນຮູ້ພື້ນຖານແລະທັກສະໃໝ່ໆ ທີ່ໂດຍທົ່ວໄປຈະພັດທະນາໃນຊ່ວງສາມປີທໍາອິດຂອງຊີວິດ.



**ກົດໝາຍ** Lanterman Act ແມ່ນຫຍັງ?
ກົດໝາຍ Lanterman Developmental Disabilities Services Act ເປັນກົດໝາຍຂອງລັດຄາລິຟໍເນຍທີ່ສັນຍາວ່າຈະໃຫ້ບໍລິການ ແລະ ການສະໜັບສະໜູນແກ່ຜູ້ທີ່ມີຄວາມພິການດ້ານພັດທະນາການ ແລະ ຄອບຄົວຂອງເຂົາເຈົ້າ. ກົດໝາຍສະບັບນີ້ໄດ້ຈັດຕັ້ງເຄືອຂ່າຍລະດັບລັດທີ່ມີອົງກອນໃນຊຸມຊົນທີ່ບໍ່ຫວັງຜົນກໍາໄລ 21 ແຫ່ງທີ່ ເຊິ່ງເອີ້ນວ່າສູນເຣຈິນັລ.

ທ່ານສາມາດອ່ານເພີ່ມເຕີມໄດ້ໃນ ຄູ່ມືຜູ້ບໍລິໂພກກ່ຽວກັບກົດໝາຍ Lanterman Act.

*"ຂ້າພະເຈົ້າຕ້ອງການໃຫ້ມີບາງຄົນທີ່ຈະຄອຍແນະນຳ ແລະພາຂ້າພະເຈົ້າຜ່ານຊ່ວງ Early Start ເພາະວ່າຂ້າພະເຈົ້າບໍ່ຮູ້ວ່າຈະໄປບ່ອນໃດຕໍ່ໄປແລະຕ້ອງເຮັດສິ່ງໃດ." - ພໍ່ແມ່*

**ພະແນກບໍລິການດ້ານພັດທະນາການແມ່ນໃຜ?**

ພະແນກບໍລິການດ້ານພັດທະນາການລັດຄາລິຟໍເນຍ (DDS) ເຮັດວຽກເພື່ອໃຫ້ແນ່ໃຈວ່າຊາວຄາລິຟໍເນຍທີ່ມີຄວາມພິການດ້ານພັດທະນາການຈະມີໂອກາດໃນການເລືອກແລະໃຊ້ຊີວິດຢ່າງອິດສະຫຼະ ແລະສ້າງສັນ ໃນຖານະສະມາຊິກຂອງຊຸມຊົນຂອງເຂົາເຈົ້າໃນສະພາບແວດລ້ອມທີ່ມີຂໍ້ຈຳກັດໜ້ອຍທີ່ສຸດເທົ່າທີ່ຈະເປັນໄປໄດ້. DDS ແມ່ນພະແນກຂອງລັດທີ່:

- ໃຫ້ຄວາມເປັນຜູ້ນຳ, ຄວາມຊ່ວຍເຫຼືອດ້ານວິຊາການ ແລະທິດທາງນະໂຍບາຍ
- ກຳກັບດູແລການປະສານງານ ແລະຄວາມຮັບຜິດຊອບໃນການສົ່ງມອບບໍລິການ
- ບໍລິຫານຈັດການບໍລິການທີ່ດຳເນີນການໂດຍລັດ
- ເຮັດສັນຍາກັບສູນເຣຈິນັລ 21 ແຫ່ງໃນລັດຄາລິຟໍເນຍເພື່ອໃຫ້ບໍລິການ
- ແຫຼ່ງຊັບພະຍາກອນຕ່າງໆ



**ສູນເຣຈິນັລແມ່ນຫຍັງ?**

ສູນເຣຈິນັລແມ່ນອົງກອນທ້ອງຖິ່ນທີ່ຈັດຫາບໍລິການສຳລັບເດັກນ້ອຍແລະຜູ້ໃຫຍ່ທີ່ມີຄວາມພິການດ້ານພັດທະນາການ ແລະຄອບຄົວຂອງເຂົາເຈົ້າ. ມີສູນເຣຈິນັລໃນແຕ່ລະພື້ນທີ່ທົ່ວທັງລັດຄາລິຟໍເນຍ ແລະທ່ານຈະເຮັດວຽກຮ່ວມກັບສູນເຣຈິນັລທີ່ຢູ່ໃກ້ກັບບ່ອນທີ່ທ່ານອາໄສຢູ່ຫຼາຍທີ່ສຸດ. ສູນເຣຈິນັລຈະ:

- ປະເມີນຄວາມລ່າຊ້າດ້ານພັດທະນາການ ຫຼື ຄວາມພິການ
- ພິຈາລະນາສິດໃນການເຂົ້າເຖິງບໍລິການ
- ໃຫ້ບໍລິການຈັດການກໍລະນີ ແລະປະສານງານບໍລິການ
- ການກຳກັບດູແລຜູ້ໃຫ້ບໍລິການ
- ຈັດຕັ້ງປະຕິບັດນະໂຍບາຍຂອງລັດ ແລະລັດຖະບານກາງ

ເຖິງແມ່ນວ່າສູນເຣຈິນັລທັງໝົດຈະມີໂປແກມທີ່ຄ້າຍຄືກັນ ແຕ່ສູນເຣຈິນັລແຕ່ລະແຫ່ງອາດຈະດຳເນີນການແຕກຕ່າງກັນ ເພື່ອຕອບສະໜອງຄວາມຈຳເປັນຂອງຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ.  ຈະເປັນປະໂຫຍດຖ້າທ່ານຮຽນຮູ້ວິທີການເຮັດວຽກຂອງສູນເຣຈິນັລຂອງທ່ານ.

ທ່ານສາມາດຊອກຫາສູນເຣຈິນັລຂອງທ່ານໂດຍໃສ່ລະຫັດໄປສະນີຂອງທ່ານເຂົ້າໄປໃນ ເຄື່ອງມືຊອກຫາສູນເຣຈິນັລ.



> *"ສູນເຣຈີນັລຢູ່ທີ່ນີ້ເພື່ອເຮັດໃຫ້ຊີວິດງ່າຍຂຶ້ນ.*
> *ເຮັດໃຫ້ການເດີນທາງຂອງສະມາຊິກໃນຄອບຄົວງ່າຍ*
> *ແລະການນຳທາງສະດວກຍິ່ງຂຶ້ນ.*
> *ພວກເຮົາຢູ່ທີ່ນີ້ເພື່ອສະໜັບສະໜູນທ່ານ."*
> – □□□□□□□□□□□□□□□□□□□□□□□□□□□/□□□□□□□□□□□□□

<u>**ບຸກຄົນໃດທີ່ມີຄຸນສົມບັດໃນການໄດ້ຮັບບໍລິການ Early Start?**</u>
ເດັກນ້ອຍອາຍຸຕໍ່າກວ່າ 3 ປີອາດຈະມີສິດຖ້າພວກເຂົາມີ:

ຄວາມລ່າຊ້າດ້ານພັດທະນາການ — ຫຼື — ຄວາມສ່ຽງທີ່ກໍານົດ — ຫຼື — ທີ່ຕົກຢູ່ໃນຄວາມສ່ຽງ

**ຄວາມລ່າຊ້າດ້ານພັດທະນາການ**: ຖ້າເດັກມີຄວາມລ່າຊ້າດ້ານພັດທະນາການຢ່າງໜ້ອຍ 25% ໃນໜຶ່ງດ້ານຂຶ້ນໄປ:

- ສະຕິປັນຍາ (ການຄິດ ແລະການຮຽນຮູ້)
- ການສື່ສານແບບສະແດງອອກ (ການປາກເວົ້າ ແລະການສະແດງອອກ)
- ການສື່ສານແບບຮັບຮູ້ (ການເຂົ້າໃຈພາສາ)
- ສັງຄົມແລະອາລົມ (ຄວາມຮູ້ສຶກ, ການສະແດງອອກ, ການມີປະຕິສໍາພັນ)
- ການປັບຕົວ (ທັກສະການດໍາລົງຊີວິດປະຈໍາວັນ ເຊັ່ນ ການກິນອາຫານ, ການແຕ່ງຕົວ, ການດູແລຕົນເອງ)
- ພັດທະນາການທາງຮ່າງກາຍ ແລະການເຄື່ອນໄຫວ ລວມທັງການມອງເຫັນ ແລະ ການໄດ້ຍິນ (ການຍ່າງ, ການເຄື່ອນທີ່, ການມອງເຫັນ ແລະການໄດ້ຍິນ)

**ຄວາມສ່ຽງທີ່ກໍານົດ**: ຖ້າເດັກນ້ອຍມີພາວະຄວາມສ່ຽງທີ່ຮູ້ສາເຫດທີ່ແນ່ຊັດ ມີແນວໂນ້ມສູງທີ່ຈະເກີດພັດທະນາການລ່າຊ້າ. ພາວະຄວາມສ່ຽງທີ່ກໍານົດອາດຈະລວມເຖິງເດັກນ້ອຍຜູ້ທີ່:

- ມີພາວະທາງພັນທຸກໍາທີ່ກ່ຽວຂ້ອງກັບຄວາມລ່າຊ້າດ້ານພັດທະນາການ (ເຊັ່ນ ກຸ່ມອາການດາວຊິນໂດຣມ, ກຸ່ມອາການໂຄໂມໂຊມເອັກເປາະ (Fragile X syndrome) ແລະອື່ນໆ.
- ກຸ່ມອາການທາຣົກໃນທ້ອງແມ່ໄດ້ຮັບແອກໍຮໍ
- ມີການໄດ້ຍິນ, ການມອງເຫັນ ຫຼື ການໃຊ້ແຂນຂາທີ່ຈໍາກັດ

**ທີ່ຕົກຢູ່ໃນຄວາມສ່ຽງ**:
ຖ້າເດັກມີແນວໂນ້ມທີ່ຈະມີພັດທະນາການລ່າຊ້າເນື່ອງຈາກຄວາມສ່ຽງຈຫຼາຍຢ່າງທີ່ໄດ້ຮັບການຢືນຢັນຈາກຜູ້ຊ່ຽວຊານ. ພາວະທີ່ຕົກຢູ່ໃນຄວາມສ່ຽງ ຫຼື ມີຄວາມສ່ຽງສູງ ອາດຮວມເຖິງເດັກນ້ອຍທີ່:

- ເກີດກ່ອນໄວຫຼາຍ (ອາຍຸຄັນໜ້ອຍກວ່າ 32 ອາທິດ) ແລະ ມີນ້ຳໜັກແຮກເກີດຕ່ຳຫຼາຍ
- ມີບັນຫາສຸຂະພາບຫຼາຍຢ່າງ ຫຼື ຕ້ອງເຂົ້າພັກຮັກສາຕົວໃນໂຮງໝໍເປັນເວລາດົນນານ
- ເຄີຍໄດ້ຮັບຢາ ຫຼື ແອກໍຮໍກ່ອນເກີດ
- ປະສົບກັບການບາດເຈັບທີ່ຮ້າຍແຮງເມື່ອເກີດ
- ຖືກລະເລີຍປະຖິ້ມ ຫຼື ຖືກທຳຮ້າຍ

*[ເບິ່ງຄຳສັບຖ້າຕ້ອງການຂໍ້ມູນເພີ່ມເຕີມ]*

ລາຍໄດ້ຂອງຄອບຄົວ ແລະສະຖານະຄົນເຂົ້າເມືອງຈະບໍ່ກະທົບຕໍ່ສິດໃນການໄດ້ຮັບບໍລິການ Early Start.

**ການມີສິດຊົ່ວຄາວແມ່ນຫຍັງ?**
ເດັກນ້ອຍອາດເຂົ້າເງື່ອນໄຂການມີສິດຊົ່ວຄາວໄດ້ຖ້າ:

- ເດັກນ້ອຍມີອາຍຸຕ່ຳກວ່າ 5 ປີ
- ຄວາມພິການບໍ່ພຽງແຕ່ເປັນລັກສະນະທາງກາຍະພາບເທົ່ານັ້ນ
- ເດັກນ້ອຍມີຂໍ້ຈຳກັດໃນການເຮັດກິດຈະກຳທີ່ສຳຄັນໃນຊີວິດໃນສອງດ້ານຕໍ່ໄປນີ້:
    - ການນຸ່ງເຄື່ອງ ແລະການກິນອາຫານ (ການດູແລຕົນເອງ)
    - ການຟັງ ແລະການປາກເວົ້າ (ພາສາທີ່ຮັບຮັບແລະສະແດງອອກ)
    - ການຮຽນຮູ້, ການຄິດ ແລະການແກ້ໄຂບັນຫາ (ກ້າວສຳຄັນທາງປັນຍາ)
    - ການຍ່າງ ແລະການເຄື່ອນໄຫວ (ການເຄື່ອນທີ່)
    - ການຕັດສິນໃຈ, ການທີ່ລູກບອກທ່ານວ່າລາວຕ້ອງການຫຍັງ (ການກຳກັບຕົນເອງ)

ເດັກນ້ອຍທີ່ໄດ້ຮັບການບໍລິການຜ່ານການມີສິດຊົ່ວຄາວຈະມີສິດໄດ້ຮັບການບໍລິການຕາມກົດໝາຍ Lanterman Act ໄດ້ຈົນເຖິງອາຍຸຫ້າປີ. ກ່ອນວັນເກີດຄົບຮອບ 5 ປີຂອງລູກທ່ານ ສູນເຣຈີນັລຈະດຳເນີນການປະເມີນຜົນ ເພື່ອພິຈາລະນາວ່າລູກຂອງທ່ານມີຄວາມພິການດ້ານພັດທະນາການຕາມທີ່ກຳນົດໄວ້ໃນກົດໝາຍ Lanterman Developmental Services Act ຫຼື ບໍ່. ຖ້າລູກຂອງທ່ານບໍ່ກົງຕາມເກນການມີສິດໄດ້ຮັບຄວາມຊ່ວຍເຫຼືອ ບໍລິການຈະສິ້ນສຸດລົງເມື່ອອາຍຸ 5 ປີ.



**<u>ບໍລິການ Early Start ສາມາດຊ່ວຍລູກຂອງຂ້າພະເຈົ້າໄດ້ແນວໃດ?</u>**
ບໍລິການ Early Start ສະໜັບສະໜູນພໍ່ແມ່ແລະຜູ້ດູແລເຊັ່ນທ່ານໂດຍມອບບໍລິການຕ່າງໆໃຫ້. ບໍລິການບາງສ່ວນເຫຼົ່ານີ້ມອບໃຫ້ກັບລູກຂອງທ່ານໂດຍກົງ. ທ່ານອາດຈະໄດ້ຮັບການບໍລິການເພື່ອຊ່ວຍໃຫ້ທ່ານຮຽນຮູ້ວິທີສະໜັບສະໜູນພັດທະນາການແລະຄວາມຈຳເປັນຂອງລູກຂອງທ່ານ. [*ເບິ່ງພາກສ່ວນທີ່ 3: ການນຳທາງບໍລິການ Early Start*]

ໃນບາງກໍລະນີ ບໍລິການ Early Start ອາດຈັດຫາໃຫ້ໂດຍເຂດການສຶກສາໃນພື້ນທີ່ ຫຼືຫ້ອງການສຶກສາທິການຂອງເຄົາຕີ້. ຄອບຄົວທີ່ມີເດັກນ້ອຍທີ່ສູນເສຍການໄດ້ຍິນ, ຄວາມບົກຜ່ອງໃນການມອງເຫັນ ຫຼື ຄວາມພິການທາງຮ່າງກາຍ ອາດຈະໄດ້ຮັບບໍລິການ Early Start ຈາກເຂດການສຶກສາໃນພື້ນທີ່ ຫຼືຫ້ອງການສຶກສາທິການຂອງເຄົາຕີ້. ໃນບາງພື້ນທີ່ຂອງລັດຄາລິຟໍເນຍ ຄອບຄົວອາດຈະໄດ້ຮັບບໍລິການຈາກທັງເຂດການສຶກສາໃນພື້ນທີ່ ແລະສູນເຣຈິນັລ.

**ບໍລິການ Early Start ຜ່ານສູນເຣຈິນັລ**:
- ເດັກນ້ອຍທີ່ມີພັດທະນາການລ່າຊ້າ ຫຼື ມີພາວະທີ່ອາດຈະສົ່ງຜົນໃຫ້ເກີດພັດທະນາການລ່າຊ້າ ຫຼື ຄວາມພິການ

**ບໍລິການ Early Start ຜ່ານເຂດການສຶກສາໃນພື້ນທີ່ ຫຼືຫ້ອງການສຶກສາທິການຂອງເຄົາຕີ້ຂອງທ່ານ**:
- ເດັກນ້ອຍທີ່ບໍ່ມີພັດທະນາການລ່າຊ້າ ຫຼື ຄວາມພິການ ແຕ່:
  - ຫູໜວກ ຫຼື ສູນເສຍການໄດ້ຍິນ
  - ຕາບອດ ຫຼື ມີຄວາມບົກຜ່ອງໃນການມອງເຫັນ
  - ມີຄວາມພິການທາງຮ່າງກາຍ

*"ກຽມພ້ອມສຳລັບການປະຊຸມ IFSP ຂອງທ່ານ. ຈົດບັນທຶກຄວາມຄິດຂອງທ່ານກ່ຽວກັບຄຳຖາມຕ່າງໆ ເຊັ່ນ: ລູກຂອງທ່ານຈຳເປັນໃນສິ່ງໃດ? ທ່ານມີຄວາມກັງວົນຫຍັງ? ມີສິ່ງໃດແດ່ທີ່ສາມາດຊ່ວຍລູກແລະຄອບຄົວຂອງທ່ານໄດ້?"*
*- ຜູ້ສະໜັບສະໜູນຊ່ວຍເຫຼືອຄອບຄົວ*

**<u>ຂ້າພະເຈົ້າຈະໄດ້ຮັບການບໍລິການປະເພດໃດແດ່ຈາກບໍລິການ Early Start?</u>**
ບໍລິການ Early Start ສາມາດໃຫ້ບໍລິການທີ່ຫຼາກຫຼາຍ. ບໍລິການທີ່ທ່ານແລະລູກຂອງທ່ານຈະໄດ້ຮັບແມ່ນຂຶ້ນຢູ່ກັບຄວາມຈຳເປັນຂອງລູກຂອງທ່ານ. ເດັກນ້ອຍອາດຈະໄດ້ຮັບບໍລິການທີ່ແຕກຕ່າງກັນ ເນື່ອງຈາກເຂົາເຈົ້າມີຄວາມຈຳເປັນທີ່ແຕກຕ່າງກັນ. *[ເບິ່ງຄຳສັບສຳລັບຄຳນິຍາມຂອງບໍລິການເຫຼົ່ານີ້]*

ຕໍ່ໄປນີ້ແມ່ນບໍລິການທົ່ວໄປບາງສ່ວນທີ່ໃຫ້ບໍລິການໂດຍຜູ້ຊ່ຽວຊານທີ່ມີຄຸນສົມບັດ:
- ເຕັກໂນໂລຊີຊ່ວຍເຫຼືອ
- ໂສຕະສຳຜັດວິທະຍາ (ການສຶກສາກ່ຽວກັບການໄດ້ຍິນສຽງ)
- ການຝຶກອົບຮົມຄອບຄົວ, ການໃຫ້ຄຳປຶກສາ ແລະການໄປຢ້ຽມຢາມເຮືອນ
- ການປິ່ນປົວກ່ຽວກັບການກິນອາຫານ
- ການບໍລິການສຸຂະພາບ
- ບໍລິການດ້ານພັດທະນາການຂອງເດັກອ່ອນ
- ບໍລິການທາງການແພດເພື່ອຈຸດປະສົງໃນການວິນິດໄສ/ການປະເມີນເທົ່ານັ້ນ
- ບໍລິການດູແລພະຍາບານ
- ບໍລິການດ້ານໂພຊະນາການ
- ອາຊີວະບຳບັດ
- ກາຍະພາບບຳບັດ
- ການບໍລິການດ້ານຈິດຕະວິທະຍາ
- ການປະສານງານບໍລິການ (ການຈັດການກໍລະນີ)
- ບໍລິການພາສາມື ແລະ ພາສາໃບ້
- ບໍລິການງານສັງຄົມສົງເຄາະ
- ການສອນສະເພາະທາງ
- ບໍລິການດ້ານການປາກເວົ້າແລະພາສາ
- ການເດີນທາງ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ
- ບໍລິການດ້ານການມອງເຫັນ



**ຂ້າພະເຈົ້າຈະຕ້ອງເສຍຄ່າໃຊ້ຈ່າຍສໍາລັບບໍລິການ Early Start ບໍ?**

ທ່ານອາດຈະໄດ້ຮັບການຮ້ອງຂໍໃຫ້ກວດສອບວ່າປະກັນສຸຂະພາບຂອງຄອບຄົວຂອງທ່ານ ຫຼືແຫຼ່ງຊັບພະຍາກອນອື່ນໆຈະພຽງພໍສໍາລັບຈ່າຍຄ່າບໍລິການບາງສ່ວນໄດ້ ຫຼື ບໍ່. ບໍລິການທີ່ຈໍາເປັນທີ່ປະກັນສຸຂະພາບບໍ່ຄຸ້ມຄອງສາມາດຊື້ ຫຼື ໃຫ້ບໍລິການໂດຍສູນເຣຈິນັລ. ມີແຫຼ່ງຂໍ້ມູນຕ່າງໆທີ່ໃຫ້ທ່ານສາມາດກວດສອບໄດ້ວ່າທ່ານມີຄຸນສົມບັດໃນການຮັບບໍລິການດູແລສຸຂະພາບທີ່ເສຍຄ່າໃຊ້ຈ່າຍພຽງເລັກນ້ອຍ ຫຼື ບໍ່ມີຄ່າໃຊ້ຈ່າຍ ເຊັ່ນ Medi-Cal ຫຼື ບໍ່.

# ພາກສ່ວນທີ່ 2: ການຍື່ນສະໝັກຂໍຮັບບໍລິການ EARLY START

**<u>ຂ້າພະເຈົ້າຄິດວ່າລູກຂອງຂ້າພະເຈົ້າມີພາວະ ຫຼື ຄວາມລ່າຊ້າດ້ານພັດທະນາການທີ່ອາດຈະຕ້ອງໄດ້ຮັບບໍລິການແຊກແຊງແຕ່ເລີ່ມຕົ້ນ. ຂ້າພະເຈົ້າຈະເຮັດແນວໃດ?</u>**
ເລີ່ມຕົ້ນດ້ວຍການໂທຫາ ຫຼື ການສົ່ງຕໍ່ເປັນລາຍລັກອັກສອນໄປທີ່ສູນເຣຈິນັລ. ທຸກຄົນສາມາດສົ່ງຕໍ່ບໍລິການໄປທີ່ສູນເຣຈິນັລໄດ້. ເຊິ່ງລວມເຖິງທ່ານໝໍຂອງລູກທ່ານ, ຜູ້ໃຫ້ບໍລິການດູແລເດັກ ຫຼື *ຕົວທ່ານ* .

ເມື່ອມີການສົ່ງຕໍ່ແລ້ວ ສູນເຣຈິນັລຈະຕິດຕໍ່ທ່ານເພື່ອປຶກສາຫາລືກ່ຽວກັບໂຄງການ Early Start ແລະກະບວນການຮັບເຂົ້າ ເຊິ່ງລວມເຖິງການປະເມີນຄຸນສົມບັດ.

ການປະເມີນສິດສຳລັບໂຄງການ Early Start
ຈະສາມາດເລີ່ມດຳເນີນການໄດ້ສະເພາະເມື່ອໄດ້ຮັບຄວາມຍິນຍອມທີ່ພໍ່ແມ່ຫຼືຜູ້ປົກຄອງໄດ້ລົງນາມເທົ່ານັ້ນ.



**<u>ຂ້າພະເຈົ້າຈະປຶກສາຫາລືກ່ຽວກັບຄວາມກັງວົນຂອງຂ້າພະເຈົ້າກັບແພດ ຫຼື ກັບສູນເຣຈິນັລໃນພື້ນທີ່ຂອງຂ້າພະເຈົ້າໄດ້ແນວໃດ?</u>**
ສູນເຣຈິນັລຈະປຶກສາຫາລືກ່ຽວກັບຂໍ້ກັງວົນຂອງທ່ານກັບທ່ານ ແລະແບ່ງປັນຂໍ້ມູນກ່ຽວກັບໂຄງການ Early Start ແລະກະບວນການປະເມີນເພື່ອພິຈາລະນາຄຸນສົມບັດ. ຈະມີການປະເມີນພັດທະນາການທຸກດ້ານ (ສະຕິປັນຍາ, ສັງຄົມ/ອາລົມ ການເຄື່ອນໄຫວກ້າມເນື້ອມັດນ້ອຍ ແລະກ້າມເນື້ອມັດໃຫຍ່ ລວມທັງການໄດ້ຍິນແລະການມອງເຫັນ, ການສື່ສານແບບສະແດງອອກແລະແບບຮັບຮູ້ ແລະທັກສະການຊ່ວຍເຫຼືອຕົນເອງ/ການປັບຕົວ).

ໃຊ້ [ແຫຼ່ງຂໍ້ມູນນີ້ເພື່ອຄົ້ນຫາວ່າມີເຫດຜົນ ຫຼື ຂໍ້ກັງວົນໃດໆທີ່ທ່ານມີກ່ຽວກັບພັດທະນາການຂອງລູກຂອງທ່ານ ຫຼື ບໍ່].

**ມີຂໍ້ມູນທີ່ເປັນປະໂຫຍດທີ່ຂ້າພະເຈົ້າຄວນແບ່ງປັນກັບສູນເຣຈິນັລບໍ?**

ສູນເຣຈິນັລໃຊ້ແນວທາງທີ່ມຸ່ງເນັ້ນໄປທີ່ຄອບຄົວເພື່ອເກັບກຳຂໍ້ມູນກ່ຽວກັບລູກແລະຄອບຄົວຂອງທ່ານເພື່ອເບິ່ງວ່າລູກຂອງທ່ານມີສິດໄດ້ຮັບບໍລິການ Early Start ຫຼື ບໍ່. ສູນເຣຈິນັລໃຊ້ຂໍ້ມູນນີ້ເພື່ອເບິ່ງວ່າທ່ານ ແລະ ລູກຂອງທ່ານຈຳເປັນໃນການໄດ້ຮັບບໍລິການໃດແດ່ ດັ່ງນັ້ນຂໍ້ມູນທັງໝົດກ່ຽວກັບລູກຂອງທ່ານຈຶ່ງມີປະໂຫຍດ. ທ່ານສາມາດໃຫ້ຂໍ້ມູນທີ່ມີຄຸນຄ່າເພື່ອຊ່ວຍໃຫ້ສູນເຣຈິນັລເຂົ້າໃຈຈຸດແຂງ ແລະຄວາມຈຳເປັນຂອງລູກຂອງທ່ານ ແລະຄວາມກັງວົນຂອງທ່ານໃນຖານະທີ່ເປັນພໍ່ແມ່. ທ່ານຍັງສາມາດໃຫ້ຂໍ້ມູນຈາກແຫຼ່ງອື່ນໄດ້ເຊັ່ນກັນ.

ຕົວຢ່າງ:

- ຂໍ້ມູນກ່ຽວກັບການຖືພາ ແລະການເກີດລູກ
- ສຳເນົາບັດສະຫວັດດີການສຸຂະພາບ ຫຼື ບັດປະກັນສຸຂະພາບ
- ບັນທຶກຂອງໂຮງໝໍ ແລະ/ຫຼື ບັນທຶກທາງການແພດ
- ບົດລາຍງານການປະເມີນໃດໆ (ເຊັ່ນ ຜົນການກວດຄັດກອງ, ການປະເມີນທີ່ເຮັດໂດຍນັກຈິດຕະວິທະຍາ, ນັກກາຍະພາບບຳບັດ ຫຼື ຜູ້ຊ່ຽວຊານດ້ານສຸຂະພາບອື່ນໆ)
- ບົດລາຍງານ ຫຼື ຂໍ້ກັງວົນຈາກໂຄງການ Early Head Start, Home Visitors, Special Supplemental Nutrition Program for Women, Infants, and Children (WIC) ຫຼື Day Care

ຂໍ້ມູນທັງໝົດທີ່ທ່ານໃຫ້ໄວ້ເປັນຄວາມລັບ. ຈະບໍ່ມີການແບ່ງປັນຂໍ້ມູນກັບບຸກຄົນໃດກໍ່ຕາມໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ.



ໃນລະຫວ່າງການປະເມີນ ຜູ້ຊ່ຽວຊານດ້ານພັດທະນາການເດັກຈະອະທິບາຍຂັ້ນຕອນການປະເມີນໃຫ້ທ່ານຟັງ. ຜູ້ຊ່ຽວຊານອາດຈະເປັນນັກຈິດຕະວິທະຍາເດັກ, ຜູ້ຊ່ຽວຊານດ້ານການປາກເວົ້າແລະພາສາ, ຜູ້ຊ່ຽວຊານດ້ານອາຊີວະບຳບັດ ຫຼື ຜູ້ຊ່ຽວຊານດ້ານພັດທະນາການເດັກດ້ານອື່ນ.

ໃນລະຫວ່າງການປະເມີນ ບຸກຄົນນີ້ອາດຈະ:

- ຫຼິ້ນກັບລູກຂອງທ່ານເປັນສ່ວນໜຶ່ງຂອງການປະເມີນ ເພື່ອລະບຸຈຸດແຂງ ແລະຄວາມຈຳເປັນທີ່ລາວອາດຈະມີ
- ສັງເກດການຫຼິ້ນ ແລະການໂຕ້ຕອບຂອງທ່ານກັບລູກຂອງທ່ານ
- ຖາມຄຳຖາມກ່ຽວກັບລູກຂອງທ່ານ, ຄອບຄົວຂອງທ່ານ ແລະການຖືພາແລະການເກີດລູກ

ຜົນການປະເມີນຂອງລູກຂອງທ່ານຈະຖືກປຽບທຽບກັບເດັກນ້ອຍຄົນອື່ນໆໃນໄວດຽວກັນທີ່ບໍ່ມີຄວາມລ່າຊ້າດ້ານພັດທະນາການ ຫຼື ຄວາມພິການ. ຖ້າຜົນການປະເມີນຂອງລູກຂອງທ່ານສະແດງໃຫ້ເຫັນຄວາມລ່າຊ້າດ້ານພັດທະນາການດ້ານໃດດ້ານໜຶ່ງ ລູກຂອງທ່ານອາດຈະມີສິດໄດ້ຮັບການບໍລິການ Early Start.

**ຈະເກີດຫຍັງຂຶ້ນເມື່ອຂ້າພະເຈົ້າໂທຫາສູນເຣຈີນັລ?**

ຫຼັງຈາກຕິດຕໍ່ສູນເຣຈີນັລຄັ້ງທຳອິດແລ້ວ ຈະມີການດຳເນີນການ 5 ຂັ້ນຕອນ. ຂັ້ນຕອນທີ່ 1 ເຖິງ 3 ແມ່ນເອີ້ນວ່າ "ການຮັບເຂົ້າ" ແລະຈະຕ້ອງເຮັດສຳເລັດພາຍໃນ 45 ວັນ ຫຼື ໄວກວ່ານັ້ນເມື່ອຕິດຕໍ່ສູນເຣຈີນັລ. ຂັ້ນຕອນທີ່ 4 ເຖິງ 5 ເອີ້ນວ່າ "ແຜນບໍລິການຄອບຄົວສ່ວນບຸກຄົນ (IFSP) ແລະການບໍລິການຕ່າງໆ." ການບໍລິການຕ່າງໆຄວນເລີ່ມຕົ້ນໂດຍໄວທີ່ສຸດເມື່ອລູກຂອງທ່ານມີສິດໄດ້ຮັບບໍລິການ Early Start.




**ຂັ້ນຕອນທີ່ 1: ການສົ່ງຕໍ່ ຫຼື ການຕິດຕໍ່ສູນເຣຈີນັລ**

ເມື່ອທ່ານໂທຫາສູນເຣຈີນັລ ທ່ານຈະມີການມອບໝາຍກໍລະນີທ່ານໃຫ້ຜູ້ປະສານງານບໍລິການ ຫຼື ຜູ້ຊ່ຽວຊານດ້ານການຮັບເຂົ້າດູແລ ເຊິ່ງຈະຊ່ວຍໃນການກຳນົດເວລາການປະເມີນ ແລະແນະນຳທ່ານຕະຫຼອດຂັ້ນຕອນພິຈາລະນາສິດ. ທ່ານຄວນແບ່ງປັນບັນທຶກການປະເມີນແລະການວິນິດໄສອື່ນໆກັບຜູ້ປະສານງານບໍລິການ ຫຼື ຜູ້ຊ່ຽວຊານດ້ານການຮັບເຂົ້າ. ຖ້າພົບວ່າມີສິດໄດ້ຮັບການບໍລິການ ຜູ້ປະສານງານບໍລິການຂອງທ່ານຈະຊ່ວຍຮັບ ແລະສະໜັບສະໜູນບໍລິການ ແລະການສະໜັບສະໜູນທີ່ຊ່ວຍໃຫ້ທ່ານແລະຄອບຄົວຂອງທ່ານເຂົ້າເຖິງການບໍລິການ Early Start ໄດ້.

**ຂັ້ນຕອນທີ່ 2: ຄຳຍິນຍອມ**
ການລົງນາມໃຫ້ຄຳຍິນຍອມມີຄວາມຈຳເປັນສຳລັບການປະເມີນຄຸນສົມບັດ ທ່ານ (ຫຼື ຜູ້ທີ່ສາມາດຕັດສິນໃຈດ້ານການສຶກສາແທນເດັກໄດ້ຕາມກົດໝາຍ ຖ້າບໍ່ມີພໍ່ແມ່ຢູ່ນຳ) ຈະຕ້ອງເຊັນແບບຟອມໃຫ້ຄຳຍິນຍອມທີ່ລະບຸວ່າທ່ານຕົກລົງຍິນຍອມໃຫ້ມີການປະເມີນລູກຂອງທ່ານ.

**ຂັ້ນຕອນທີ່ 3: ການປະເມີນຄຸນສົມບັດ ແລະການປະເມີນຜົນເພື່ອການວາງແຜນບໍລິການ**
ເມື່ອໄດ້ຮັບຄຳຍິນຍອມແລ້ວ ລູກຂອງທ່ານຈະໄດ້ຮັບການປະເມີນເພື່ອພິຈາລະນາວ່າເຂົາເຈົ້າມີສິດໄດ້ຮັບບໍລິການ Early Start ຫຼື ບໍ່. ບຸກຄົນທີ່ດຳເນີນການປະເມີນຈະອະທິບາຍສິ່ງທີ່ຈະເກີດຂຶ້ນໃນແຕ່ລະຂັ້ນຕອນຂອງຂະບວນການ. ການປະເມີນອາດຈະປະກອບດ້ວຍ:

- ການກວດສອບບັນທຶກ ຫຼື ບົດລາຍງານຈາກການປະເມີນຜົນແລະການວິນິດໄສກ່ອນໜ້າ
- ການປະເມີນພັດທະນາການແທນການປະເມີນຜົນການວິນິດໄສໂດຍສູນເຣຈິນັລ
- ການປະເມີນ ຫຼື ການປະເມີນຜົນອື່ນໆທີ່ຈຳເປັນໃນການພິຈາລະນາຄຸນສົມບັດແລະຄວາມຈຳເປັນໃນການບໍລິການ

ທ່ານອາດຈະພົບກັບເຈົ້າໜ້າທີ່ຄົນອື່ນໆຂອງສູນເຣຈິນັລ ລວມທັງນັກສັງຄົມສົງເຄາະ, ນັກຈິດຕະວິທະຍາ, ຜູ້ຊ່ຽວຊານດ້ານສຸຂະພາບ ແລະຜູ້ຊ່ຽວຊານດ້ານອື່ນໆ. ພວກເຂົາຈະເຮັດວຽກຮ່ວມກັບທ່ານເປັນທີມໃນຂະບວນການຮັບເຂົ້າແລະການປະເມີນ. ທີມງານນີ້ເອີ້ນວ່າທີມງານ IFSP ເຊິ່ງປະກອບດ້ວຍແພດຢ່າງໜ້ອຍໜຶ່ງຄົນ, ນັກຈິດຕະວິທະຍາ ແລະຜູ້ປະສານງານການຮັບເຂົ້າ ຫຼື ຜູ້ປະສານງານບໍລິການ. *[ເບິ່ງພາກສ່ວນທີ່ 1: ບຸກຄົນໃດມີຄຸນສົມບັດໃນການໄດ້ຮັບບໍລິການ Early Start?]*

**ຂັ້ນຕອນທີ່ 4: ແຜນບໍລິການຄອບຄົວສະເພາະບຸກຄົນ (IFSP)**
ຖ້າລູກຂອງທ່ານມີສິດໄດ້ຮັບບໍລິການ Early Start ທ່ານ ແລະຜູ້ປະສານງານບໍລິການຂອງທ່ານພ້ອມກັບສະມາຊິກຄົນອື່ນໆຂອງທີມ IFSP ຈະພັດທະນາແຜນ IFSP. ແຜນນີ້ຈະລວມເຖິງຈຸດແຂງ ແລະຄວາມຈຳເປັນຂອງລູກຂອງທ່ານ, ຂໍ້ກັງວົນຂອງທ່ານ ແລະບໍລິການ Early Start ທີ່ລູກຂອງທ່ານຈະໄດ້ຮັບ. *[ເບິ່ງພາກສ່ວນທີ່ 3: IFSP ແມ່ນຫຍັງ?]*

**ຂັ້ນຕອນທີ່ 5: ບໍລິການຕ່າງໆ**
ເມື່ອພັດທະນາ IFSP ແລ້ວ ບໍລິການ Early Start ຈະເລີ່ມຕົ້ນໂດຍໄວທີ່ສຸດ ແຕ່ບໍ່ເກີນ 45 ວັນນັບຈາກວັນທີ່ທ່ານຕົກລົງຍິນຍອມຮັບບໍລິການທີ່ລະບຸໄວ້ໃນ IFSP. ທ່ານຈະເຮັດວຽກຮ່ວມກັບຜູ້ປະສານງານບໍລິການ ແລະທີມງານ IFSP ຂອງທ່ານເພື່ອຕັດສິນໃຈເລືອກບໍລິການທີ່ດີທີ່ສຸດສຳລັບລູກຂອງທ່ານ ເຊິ່ງເໝາະສົມກັບຄວາມຈຳເປັນຂອງຄອບຄົວຂອງທ່ານ. ບໍລິການຕ່າງໆຄວນຈະເກີດຂຶ້ນໃນ "ສະພາບແວດລ້ອມຕາມທຳມະຊາດ". ເຫຼົ່ານີ້ແມ່ນສະຖານທີ່ທີ່ຄຸ້ນເຄີຍ ເຊັ່ນ ເຮືອນ ຫຼື ສະຖານທີ່ອື່ນໆໃນຊຸມຊົນຂອງທ່ານ.

ຖ້າສູນເຣຈິນັລບໍ່ຕອບສະໜອງພາຍໃນໄລຍະເວລາດັ່ງກ່າວ ທ່ານຄວນສືບຕໍ່ໂທຫາຜູ້ປະສານງານບໍລິການ ຫຼື ຜູ້ຊ່ຽວຊານດ້ານການຮັບເຂົ້າ ແລະຈົດບັນທຶກວັນທີທີ່ທ່ານໂທຕິດຕໍ່ໄວ້. ທ່ານຄວນຈົດບັນທຶກສິ່ງທີ່ຜູ້ປະສານງານບໍລິການ ຫຼື ຜູ້ຊ່ຽວຊານດ້ານການຮັບເຂົ້າໄດ້ບອກທ່ານເພື່ອເປັນຫຼັກຖານການຕິດຕໍ່ກັບສູນເຣຈິນັລເຊັ່ນກັນ.ຖ້າສູນເຣຈິນັລເຮັດໃຫ້ຂະບວນການນີ້ລ່າຊ້າ ທ່ານສາມາດຍື່ນຄຳຮ້ອງຮຽນຕໍ່ກັບຜູ້ອຳນວຍການສູນເຣຈິນັລ ແລະ/ຫຼື ຕໍ່ກັບ DDS. *[ເບິ່ງພາກສ່ວນທີ່ 5: ຮູ້ສິດທິຂອງທ່ານ]*

*"ເມື່ອຄອບຄົວເຂົ້າຮ່ວມຂັ້ນຕອນການຮັບເຂົ້າ ເຂົາເຈົ້າຢູ່ໃນຊ່ວງເວລາທີ່ເຄັ່ງຕຶງ ແລະການປ່ຽນຜ່ານຄັ້ງໃຫຍ່.
ພໍ່ແມ່ຈະຮູ້ສຶກກັງວົນໃຈໃນຕອນເລີ່ມຕົ້ນເນື່ອງຈາກເຂົາເຈົ້າກຳລັງຈັດການກັບຂໍ້ມູນໃໝ່ທັງໝົດນີ້. ບາງຄອບຄົວອາດມີອຸປະສັກດ້ານພາສາ ແລະຕ້ອງການການສະໜັບສະໜູນເປັນພາສາຂອງເຂົາເຈົ້າ."- ຜູ້ສະໜັບສະໜູນຊ່ວຍເຫຼືອຄອບຄົວ
- ຜູ້ສະໜັບສະໜູນຊ່ວຍເຫຼືອຄອບຄົວ*

ທ່ານສາມາດເບິ່ງ ວິດີໂອສັ້ນທີ່ອະທິບາຍກະບວນການຮັບເຂົ້າ ເອີ້ນວ່າ Story of Max.

**ມີບຸກຄົນອື່ນທີ່ສາມາດຊ່ວຍເຫຼືອຂ້າພະເຈົ້າໄດ້ບໍ?**
ທ່ານສາມາດຂໍຮັບຄວາມຊ່ວຍເຫຼືອຈາກ:

FRCNCA

**ສູນຊັບພະຍາກອນສໍາລັບຄອບຄົວ**: ຜູ້ປະສານງານການບໍລິການ ຫຼື ຜູ້ຊ່ຽວຊານດ້ານການຮັບເຂົ້າຂອງທ່ານຈະຮ້ອງຂໍຄວາມຍິນຍອມຈາກທ່ານໃນການແບ່ງປັນຂໍ້ມູນການຕິດຕໍ່ກັບສູນຊັບພະຍາກອນຄອບຄົວໃນພື້ນທີ່ຂອງທ່ານ. ສູນເຫຼົ່ານີ້ອາດຈະມີເຈົ້າໜ້າທີ່ທີ່ເປັນພໍ່ແມ່ຂອງເດັກທີ່ມີຄວາມພິການ ແລະຄຸ້ນເຄີຍກັບກະບວນການໃນການເຂົ້າເຖິງບໍລິການ early start ໃນສູນເຣຈິນັລຂອງທ່ານ. ພວກເຂົາສາມາດໃຫ້ແຫຼ່ງຂໍ້ມູນແລະການສະໜັບສະໜູນແກ່ທ່ານໄດ້. ເຂົາເຈົ້າສາມາດເຊື່ອມໂຍງທ່ານກັບຄອບຄົວອື່ນໆທີ່ກຳລັງປະເຊີນກັບການເດີນທາງດຽວກັນກັບຄອບຄົວຂອງທ່ານໄດ້. ເຂົາເຈົ້າຮູ້ຫຼາຍກ່ຽວກັບ:

- ຄວາມຮູ້ສຶກກັງວົນກ່ຽວກັບບໍລິການ
- ບໍລິການ Early Start
- ແຫຼ່ງຂໍ້ມູນອື່ນໆໃນທ້ອງຖິ່ນທີ່ສາມາດຊ່ວຍທ່ານ ແລະລູກຂອງທ່ານໄດ້
- ຄວາມລ່າຊ້າດ້ານພັດທະນາການແລະຄວາມພິການທີ່ແຕກຕ່າງກັນ

ມີ ສູນຊັບພະຍາກອນສໍາລັບຄອບຄົວ ທົ່ວທັງລັດຄາລິຟໍເນຍ.

ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບ ໜ້າສູນຊັບພະຍາກອນຄອບຄົວໃນເວັບໄຊ DDS ໄດ້ເຊັ່ນກັນ.

**ສາຍດ່ວນຊ່ວຍເຫຼືອແອນ້ອຍ**: ນີ້ແມ່ນສາຍດ່ວນທີ່ສາມາດໃຫ້ຂໍ້ມູນກ່ຽວກັບບໍລິການ Early Start ໄດ້. ທ່ານສາມາດໂທເບີ: 800-515-BABY (800-515-2229)

Get Connected. Get Help.™

**211**: ຫຼາຍເຄົາຕີ້ໃນລັດຄາລິຟໍເນຍມີສາຍດ່ວນຊ່ວຍເຫຼືອ 211. ສາຍດ່ວນຊ່ວຍເຫຼືອ 211 ສາມາດໃຫ້ແຫຼ່ງຊັບພະຍາກອນສໍາລັບຄວາມຈໍາເປັນຫຼາຍປະເພດ ລວມທັງການສິ່ງຕໍ່ແອນ້ອຍແລະເດັກນ້ອຍຫັດເດີນ. ທ່ານສາມາດຕິດຕໍ່ເຂົາເຈົ້າໂດຍໂທເບີ "211" ຫຼືໄປທີ່ ເວັບໄຊ 211.

**ໂລໂກ້ First 5 California**: First 5 California ມຸ່ງໝັ້ນທີ່ຈະປັບປຸງຊີວິດຂອງເດັກນ້ອຍແລະຄອບຄົວຂອງເຂົາເຈົ້າໃນລັດຄາລິຟໍເນຍຜ່ານເຄືອຂ່າຍການສຶກສາ, ບໍລິການດ້ານສຸຂະພາບ, ການດູແລເດັກ ແລະ ໂຄງການທີ່ສໍາຄັນອື່ນໆ. ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມໂດຍໄປທີ່ ເວັບໄຊ First 5 California.

**ເຂດການສຶກສາໃນພື້ນທີ່ຂອງທ່ານ ຫຼື ຫ້ອງການສຶກສາທິການເຄົາຕີ້ຂອງທ່ານ**: ເດັກນ້ອຍບາງຄົນໄດ້ຮັບການບໍລິການ Early Start ຜ່ານເຂດການສຶກສາໃນພື້ນທີ່ຂອງເຂົາເຈົ້າ ຫຼື ຫ້ອງການສຶກສາທິການແຫນສູນເຣຈິນັລ ໂຮງຮຽນອາດຈະໃຫ້ບໍລິການ Early Start ແກ່ເດັກນ້ອຍທີ່ມີຄວາມບົກພ່ອງສະເພາະພາວະກ່ຽວກັບ:

- ການມອງເຫັນ
- ການໄດ້ຍິນ

- ຄວາມບົກຜ່ອງທາງກະດູກແລະຂໍ້ຮຸນແຮງ
- ຄວາມບົກຜ່ອງເຫຼົ່ານີ້ຫຼາຍພາວະປະສົມກັນ

ຖ້າລູກຂອງທ່ານມີພາວະໃດໆເຫຼົ່ານີ້ ຫຼື ທັງໝົດ
ສູນເຣຈີນັລຂອງທ່ານຈະຊ່ວຍທ່ານຕິດຕໍ່ກັບເຂດການສຶກສາຂອງທ່ານເພື່ອຮັບບໍລິການ Early Start.

**ລູກຂອງຂ້າພະເຈົ້າບໍ່ມີສິດໄດ້ຮັບການບໍລິການ Early Start ໃນເວລານີ້. ຂ້າພະເຈົ້າມີທາງເລືອກຫຍັງແດ່?**

**ຊອກຫາໂຄງການອື່ນໆ**: ທ່ານສາມາດສອບຖາມຜູ້ຊ່ຽວຊານດ້ານການຮັບເຂົ້າ ຫຼື ຜູ້ປະສານງານບໍລິການຂອງທ່ານກ່ຽວກັບໂຄງການອື່ນໆທີ່ສາມາດຊ່ວຍເຫຼືອລູກຂອງທ່ານໄດ້.

- ທ່ານສາມາດຕິດຕໍ່ສູນຊັບພະຍາກອນຄອບຄົວໃນພື້ນທີ່ຂອງທ່ານເພື່ອຂໍຂໍ້ມູນກ່ຽວກັບໂຄງການອື່ນໆ [*ເບິ່ງພາກສ່ວນທີ່ 6: ຂໍ້ມູນການຕິດຕໍ່ ແລະ ແຫຼ່ງຊັບພະຍາກອນຕ່າງໆ*]

**ການແກ້ໄຂຂໍ້ຂັດແຍ້ງ**: ຖ້າທ່ານບໍ່ເຫັນດີນຳກັບການຕັດສິນໃຈກ່ຽວກັບສິດຂອງລູກຂອງທ່ານ ທ່ານສາມາດໂຕ້ແຍ້ງການຕັດສິນໃຈດັ່ງກ່າວໄດ້. ແບບຟອມຍື່ນຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ້ງຈະລວມຢູ່ໃນຈົດໝາຍປະຕິເສດສິດຂອງທ່ານ. ທ່ານສາມາດໂຕ້ແຍ້ງໄດ້ໂດຍເລືອກວິທີໃດໜຶ່ງຕໍ່ໄປນີ້:

- ຮ້ອງຂໍການປະຊຸມໄກ່ເກ່ຍ ຫຼື
  - ການປະຊຸມໄກ່ເກ່ຍເປັນວິທີທີ່ບໍ່ເປັນທາງການໃນການແກ້ໄຂຂໍ້ຂັດແຍ້ງກັບສູນເຣຈີນັລ ໂດຍໄດ້ຮັບຄວາມຊ່ວຍຈາກຝ່າຍທີ່ເປັນກາງ.
- ຮ້ອງຂໍການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ ຫຼື
  - ການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ ເປັນການໄຕ່ສວນທີ່ຜູ້ພິພາກສາຈະຕັດສິນວ່າການຕັດສິນໃຈຂອງສູນເຣຈີນັລໄດ້ມີຂໍ້ຜິດພາດ ຫຼື ບໍ່.
- ຍື່ນຄຳຮ້ອງຮຽນຕໍ່ລັດ.
  - ການຮ້ອງຮຽນຕໍ່ລັດແມ່ນການຮ້ອງຮຽນເປັນລາຍລັກອັກສອນທີ່ຍື່ນຕໍ່ພະແນກບໍລິການດ້ານພັດທະນາການຂອງລັດຄາລິຟໍເນຍ.

**ສະໝັກຊ້ຳ**: ທ່ານສາມາດຍື່ນສະໝັກຊ□ າໃນພາຍຫຼັງຖ້າລູກຂອງທ່ານຍັງຈ□ າເປັນຕ້ອງໄດ້ຮັບຄວາມຊ່ວຍເຫຼືອ.

ຖ້າລູກຂອງທ່ານບໍ່ມີສິດໃນການໄດ້ຮັບບໍລິການ Early Start ສູນເຣຈີນັລຈະຈັດຫາຊັບພະຍາກອນສຳລັບໂຄງການອື່ນໆທີ່ມີຢູ່ໃນພື້ນທີ່ທີ່ອາດຈະສາມາດຊ່ວຍເຫຼືອທ່ານໄດ້.

ສາມາດຊອກຫາຂໍ້ມູນເພີ່ມເຕີມໄດ້ໃນ [ສິດທິຂອງພໍ່ແມ່: ຄູ່ມືບໍລິການ Early Start Guide ສຳລັບພໍ່ແມ່].



# ພາກສ່ວນທີ່ 3: ການນຳທາງບໍລິການ EARLY START

**<u>ລູກຂອງຂ້າພະເຈົ້າມີສິດໄດ້ຮັບການບໍລິການ Early Start. ຈະເກີດຫຍັງຂຶ້ນຕໍ່ໄປ?</u>**
ຖ້າຕ້ອງການຮັບການບໍລິການ Early Start ທ່ານຈະຕ້ອງເຮັດວຽກຮ່ວມກັບຜູ້ປະສານງານບໍລິການຂອງທ່ານ. ຜູ້ປະສານງານບໍລິການຂອງທ່ານອາດເປັນບຸກຄົນທີ່ໄດ້ຮັບມອບໝາຍໃຫ້ດູແລຄອບຄົວຂອງທ່ານເມື່ອຮັບເຂົ້າ ຫຼື ທ່ານອາດຈະໄດ້ຮັບມອບໝາຍໃຫ້ກັບຜູ້ປະສານງານບໍລິການຄົນໃໝ່.

**<u>ຜູ້ປະສານງານບໍລິການ Early Start ສາມາດຊ່ວຍເຫຼືອຂ້າພະເຈົ້າໄດ້ແນວໃດ?</u>**
ທ່ານແລະຜູ້ປະສານງານບໍລິການຂອງທ່ານເປັນທີມງານ. ຜູ້ປະສານງານບໍລິການຂອງທ່ານແມ່ນຜູ້ເຊື່ອມໂຍງທ່ານກັບບໍລິການ Early Start. ຜູ້ປະສານງານບໍລິການຂອງທ່ານຈະປະສານງານ ແລະສະໜັບສະໜູນບໍລິການ Early Start ແລະການສະໜັບສະໜູນສຳລັບລູກ ແລະຄອບຄົວຂອງທ່ານ.

ຜູ້ປະສານງານບໍລິການຂອງທ່ານສາມາດ:

- ຊ່ວຍໃຫ້ທ່ານກຽມພ້ອມສຳລັບການປະຊຸມ IFSP ຂອງທ່ານ
- ຊ່ວຍໃຫ້ທ່ານໄດ້ຮັບບໍລິການ ແລະການສະໜັບສະໜູນທີ່ລະບຸໄວ້ໃນ IFSP
- ຊ່ວຍໃຫ້ທ່ານເຂົ້າເຖິງບໍລິການຜ່ານປະກັນສຸຂະພາບ, ເຄົາຕີ້ ຫຼືຊັບພະຍາກອນອື່ນໆຂອງທ່ານ

ທ່ານສາມາດຂໍປ່ຽນຜູ້ປະສານງານບໍລິການຄົນອື່ນໄດ້ຖ້າທ່ານຮູ້ສຶກວ່າບຸກຄົນນີ້ບໍ່ເໝາະສົມກັບຄອບຄົວຂອງທ່ານ.



## ແຜນບໍລິການຄອບຄົວສະເພາະບຸກຄົນ (IFSP) ແມ່ນຫຍັງ?

IFSP ເປັນແຜນການທີ່ຂຽນເປັນລາຍລັກອັກສອນສໍາລັບການໃຫ້ບໍລິການແກ່ລູກ ແລະຄອບຄົວຂອງທ່ານ ຫຼັງຈາກທີ່ພົບວ່າລູກຂອງທ່ານມີສິດໄດ້ຮັບບໍລິການ Early Start.



## IFSP ພັດທະນາຂຶ້ນໄດ້ແນວໃດ?

IFSP ໄດ້ຮັບການພັດທະນາໂດຍທີມງານໃນການປະຊຸມ IFSP. ສະມາຊິກໃນທີມປະກອບດ້ວຍທ່ານ, ສະມາຊິກຄົນອື່ນໆໃນຄອບຄົວຂອງທ່ານ, ຜູ້ປະສານງານບໍລິການຂອງທ່ານ ແລະຜູ້ທີ່ໄດ້ປະເມີນຜົນ ຫຼືກໍາລັງໃຫ້ບໍລິການແກ່ລູກຂອງທ່ານ. ທ່ານເປັນສະມາຊິກທີ່ສໍາຄັນທີ່ສຸດຂອງທີມງານ IFSP. ທ່ານຍັງສາມາດເຊີນບຸກຄົນອື່ນ ເຊັ່ນ ແພດ ຫຼື ໝູ່ເພື່ອນມາໃຫ້ການສະໜັບສະໜູນໄດ້ເຊັ່ນກັນ. ທ່ານຍັງສາມາດເຊີນຜູ້ສະໜັບສະໜູນມາຊ່ວຍສະແດງຄວາມຄິດເຫັນ ແລະຄວາມປາດຖະໜາຂອງທ່ານ ແລະຊ່ວຍໃຫ້ທ່ານຢືນຍັດເພື່ອສິດທິຂອງທ່ານ ຖ້າທ່ານຮູ້ສຶກວ່າຈໍາເປັນ.

ສິ່ງສໍາຄັນແມ່ນທຸກຄົນທີ່ກ່ຽວຂ້ອງຕ້ອງເຂົ້າໃຈທຸກສິ່ງທີ່ມີການກ່າວເຖິງໃນການປະຊຸມ IFSP. ຖ້າມີບຸກຄົນໃດເວົ້າບາງສິ່ງທີ່ທ່ານບໍ່ເຂົ້າໃຈ ຂໍໃຫ້ເຂົາເຈົ້າອະທິບາຍສິ່ງນັ້ນ. ທ່ານສາມາດຂໍນາຍພາສາໄດ້ ຖ້າທ່ານ ຫຼືສະມາຊິກໃນຄອບຄົວຂອງທ່ານໃຊ້ການສື່ສານຮູບແບບອື່ນນອກເໜືອຈາກພາສາອັງກິດ. ຜູ້ປະສານງານບໍລິການຂອງທ່ານຈະຈັດຫາສໍາເນົາ IFSP ໃຫ້ທ່ານ.

IFSP ປະກອບດ້ວຍຂໍ້ມູນກ່ຽວກັບ:

- ພັດທະນາການຂອງແອນ້ອຍ ຫຼືລູກນ້ອຍຂອງທ່ານ
  - ຈຸດແຂງ: ສິ່ງທີ່ເຂົາເຈົ້າເຮັດໄດ້ດີ
  - ຄວາມຈໍາເປັນ: ສິ່ງທີ່ລ່າຊ້າ ຫຼື ຍາກສໍາລັບເຂົາເຈົ້າ
- ດ້ວຍການຕົກລົງເຫັນດີຂອງທ່ານ ອາດຈະມີການລວມລາຍການເພີ່ມເຕີມ
  - ຂໍ້ກັງວົນ ແລະລໍາດັບຄວາມສໍາຄັນ: ລະບຸສິ່ງທີ່ເປັນຂໍ້ກັງວົນແລະລໍາດັບຄວາມສໍາຄັນຂອງທ່ານກ່ຽວກັບພັດທະນາການຂອງລູກຂອງທ່ານ.
  - ແຫຼ່ງຂໍ້ມູນຊັບພະຍາກອນ: ປະກັນສຸຂະພາບເອກະຊົນ, ສະຫວັດດີການອື່ນໆຈາກລັດ, ຄອບຄົວຂະຫຍາຍ ແລະອື່ນໆ.
  - ຜົນຮັບ: ເປົ້າໝາຍສໍາລັບລູກແລະຄອບຄົວຂອງທ່ານ, ສິ່ງທີ່ທ່ານຕ້ອງການເຮັດໃຫ້ສໍາເລັດ

   - ການປ່ຽນຜ່ານ: ທ່ານຈະໄດ້ຮັບການສະໜັບສະໜູນແນວໃດເມື່ອລູກຂອງທ່ານມີອາຍຸຄົບສາມປີ ແລະອອກຈາກບໍລິການ Early Start

IFSP ຈະມີຂໍ້ມູນກ່ຽວກັບບໍລິການຕ່າງໆ:

- ຈະມີບໍລິການຫຍັງໃຫ້ແດ່
- ບຸກຄົນໃດຈະເປັນຜູ້ໃຫ້ບໍລິການ
- ເຂົາເຈົ້າຈະເລີ່ມຕົ້ນເມື່ອໃດ
- ຈະມີການຈັດຫາບໍລິການເຫຼົ່ານີ້ໃຫ້ແນວໃດ ເຊິ່ງອາດຈະໃຫ້ບໍລິການແບບພົບໜ້າ ຫຼື ຜ່ານການຕິດຕໍ່ສື່ສານທາງເອເລັກໂຕຣນິກໄລຍະໄກ ຖ້າເປັນສິ່ງທີ່ຄອບຄົວຂອງທ່ານຕ້ອງການ
- ການໃຫ້ບໍລິການຈະດົນນານປານໃດ ແລະ ເລື້ອຍໆປານໃດ
- ໃຜຈະເປັນຜູ້ຈ່າຍຄ່າບໍລິການເຫຼົ່ານີ້
- ການປ່ຽນແປງທີ່ທີມງານຄາດວ່າຈະເຫັນສຳລັບລູກຂອງທ່ານ ແລະວິທີວັດຄວາມຄືບໜ້າໃນການປ່ຽນແປງເຫຼົ່ານັ້ນ

**<u>ບໍລິການຕ່າງໆຈະໄດ້ຮັບການກຳນົດແນວໃດ?</u>**

ບໍລິການຕ່າງໆຈະໄດ້ຮັບການກຳນົດໂດຍທີມງານ IFSP ໂດຍການທົບທວນຜົນການປະເມີນ, ການປຶກສາຫາລືກ່ຽວກັບຂໍ້ກັງວົນຂອງຄອບຄົວ, ລຳດັບຄວາມສຳຄັນ ແລະການພັດທະນາຜົນຮັບຂອງຄອບຄົວແລະເດັກ. ເມື່ອຜົນຮັບໄດ້ຮັບການພັດທະນາແລ້ວ ທີມງານຈະປຶກສາຫາລືກັນກ່ຽວກັບບໍລິການທີ່ຈຳເປັນເພື່ອໃຫ້ບັນລຸຜົນຮັບເຫຼົ່ານັ້ນ. ຜູ້ປະສານງານບໍລິການມີໜ້າທີ່ຮັບຜິດຊອບໃນການກວດສອບໃຫ້ແນ່ໃຈວ່າຄອບຄົວຂອງທ່ານຈະໄດ້ຮັບບໍລິການແລະການສະໜັບສະໜູນທີ່ລະບຸໄວ້ນັ້ນ. ການບໍລິການບາງຢ່າງອາດຈະໄດ້ຮັບເງິນທຶນຈາກໜ່ວຍງານອື່ນ (ເຊັ່ນ ບໍລິສັດປະກັນ ຫຼື Medi-Cal ຂອງທ່ານ) ແລະບໍ່ແມ່ນຈາກສູນເຣຈິນັລ.

**<u>IFSP ສາມາດປ່ຽນແປງໄດ້ບໍ?</u>**

IFSP ສາມາດ ແລະຄວນປ່ຽນແປງໄດ້ເມື່ອລູກຂອງທ່ານພັດທະນາທັກສະໃໝ່ໆ ຫຼື ຖ້າຄອບຄົວຂອງທ່ານມີຂໍ້ກັງວົນໃໝ່ກ່ຽວກັບພັດທະນາການຂອງລູກຂອງທ່ານ. ທ່ານສາມາດຮ້ອງຂໍໃຫ້ມີການປ່ຽນແປງ IFSP ຫຼັງຈາກທີ່ທ່ານໄດ້ລົງນາມແລ້ວ. IFSP ສາມາດປ່ຽນແປງໄດ້ທຸກເວລາຖ້າມີຄວາມຈຳເປັນ.

**<u>ຂັ້ນຕອນ IFSP ຕາມລຳດັບເວລາຈະເປັນແນວໃດ?</u>**

IFSP ສະບັບທຳອິດຂອງທ່ານ ລວມທັງການປະເມີນທັກສະຂອງລູກຂອງທ່ານ ແລະການລະບຸບໍລິການຕ່າງໆ ຈະຕ້ອງເກີດຂຶ້ນ**ພາຍໃນ 45 ວັນນັບຈາກການຕິດຕໍ່ຄັ້ງທຳອິດຂອງທ່ານກັບສູນເຣຈິນັລ**. ຫຼັງຈາກນັ້ນ ທ່ານຈະມີການທົບທວນ IFSP ຢ່າງໜ້ອຍທຸກໆສາມເດືອນ ຫຼືຫຼາຍຄັ້ງກວ່ານັ້ນຕາມທີ່ທ່ານຮ້ອງຂໍ. ການປະຊຸມເຫຼົ່ານີ້ມີຄວາມສຳຄັນເນື່ອງຈາກເດັກນ້ອຍເຕີບໂຕແລະປ່ຽນແປງຢ່າງໄວວາ. ເຊິ່ງໝາຍຄວາມວ່າຄວາມຈຳເປັນຂອງລູກແລະຄອບຄົວຂອງທ່ານອາດຈະມີການປ່ຽນແປງຢ່າງໄວວາເຊັ່ນດຽວກັນ. ທ່ານຍັງສາມາດປະຊຸມ IFSP ໄດ້ທຸກເວລາທີ່ມີຄວາມຈຳເປັນໃໝ່ໆ ຫຼື ຖ້າມີການປ່ຽນແປງບາງຢ່າງ.

> *"ການຊ່ວຍໃຫ້ຄອບຄົວເຂົ້າໃຈບໍລິການທັງໝົດທີ່ມີຢູ່ນັ້ນມີຄວາມສຳຄັນຫຼາຍ. ບໍລິການເຫຼົ່ານີ້ເຊື່ອມໂຍງກັບຄວາມຈຳເປັນຂອງລູກເຂົາເຈົ້າແນວໃດ... ຖ້າມີຄວາມຈຳເປັນ ພວກເຮົາມີບາງຢ່າງທີ່ພວກເຮົາສາມາດສະໜັບສະໜູນເຂົາເຈົ້າໄດ້."*
>
> – □□□□□□□□□□□□□□□□□□□□□□□□□□□/□□□□□□□□□□□□□□

## <u>ເປັນຫຍັງການລົງນາມໃນ IFSP ຈຶ່ງມີຄວາມສຳຄັນ?</u>

ກ່ອນທີ່ຈະເລີ່ມບໍລິການສຳລັບລູກຂອງທ່ານ ທ່ານຕ້ອງຕົກລົງເຫັນດີກັບແຜນໂດຍການລົງນາມໃນ IFSP. ຖ້າທ່ານບໍ່ເຫັນດີກັບສິ່ງໃດກໍ່ຕາມໃນ IFSP ມີຫຼາຍສິ່ງທີ່ທ່ານສາມາດເຮັດໄດ້ເພື່ອຍຸດຕິຂໍ້ຂັດແຍ້ງນັ້ນ. ທ່ານສາມາດຈົດບັນຂໍ້ຂັດແຍ້ງເຫຼົ່ານັ້ນໃນ IFSP ແລະເລີ່ມຕົ້ນບໍລິການໃດໆທີ່ທ່ານຕົກລົງເຫັນດີນຳ. ທ່ານສາມາດຮ້ອງຂໍຄວາມກະຈ່າງແຈ້ງເພີ່ມເຕີມຈາກຜູ້ປະສານງານບໍລິການ ຫຼື ທີວໜ້າຜູ້ປະສານງານບໍລິການຂອງທ່ານໄດ້. ຖ້າທ່ານສາມາດແກ້ໄຂຂໍ້ຂັດແຍ້ງເຫຼົ່ານີ້ໄດ້ ທ່ານມີສິດທີ່ຈະຮ້ອງຂໍໃຫ້ມີຂະບວນການແກ້ໄຂຂໍ້ຂັດແຍ້ງຢ່າງເປັນທາງການ. ສຳລັບຂໍ້ມູນເພີ່ມເຕີມໄປທີ່ *ພາກສ່ວນທີ່ 5: ຮູ້ຈັກສິດທິຂອງທ່ານ.*

## ການໄກ່ເກ່ຍ

- ທ່ານສາມາດຮ້ອງຂໍໃຫ້ມີການປະຊຸມເພື່ອປຶກສາຫາລືກ່ຽວກັບຂໍ້ຂັດແຍ້ງຂອງທ່ານກັບ "ຜູ້ໄກ່ເກ່ຍ" ທີ່ເປັນກາງເພື່ອຊ່ວຍແກ້ໄຂຂໍ້ຂັດແຍ້ງ.
- ສາມາດຊອກຫາຂໍ້ມູນກ່ຽວກັບການໄກ່ເກ່ຍໄດ້ໃນ ເວັບໄຊ DDS.

## ກະບວນການທີ່ຖືກຕ້ອງຕາມກົດໝາຍ

- ທ່ານສາມາດຮ້ອງຂໍໃຫ້ມີ "ການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ".
- ສາມາດຊອກຫາຂໍ້ມູນກ່ຽວກັບການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍໄດ້ໃນ ເວັບໄຊ DDS.

## ການຮ້ອງຮຽນຕໍ່ລັດ

- ທ່ານຍັງສາມາດຍື່ນ "ຄຳຮ້ອງຮຽນຕໍ່ລັດ"
  ຖ້າທ່ານຄິດວ່າມີການລະເມີດກົດໝາຍແລະກົດລະບຽບຂອງລັດຖະບານກາງ ຫຼື ຂອງລັດ.
  ສາມາດຊອກຫາຂໍ້ມູນກ່ຽວກັບການຍື່ນຄຳຮ້ອງຮຽນຕໍ່ລັດໄດ້ໃນ ເວັບໄຊ DDS.

*“ພໍ່ແມ່ຈໍາເປັນຕ້ອງຮູ້ວ່າມີບໍລິການໃດແດ່. ພວກເຮົາພຽງຕ້ອງການຄໍາອະທິບາຍຢ່າງລະອຽດກ່ຽວກັບບໍລິການ Early Start ແລະຄວາມເປັນໄປໄດ້ທັງໝົດ."*

— □□□□□□□

# ພາກສ່ວນທີ່ 4: ຕັ້ງແຕ່ບໍລິການ EARLY START ຈົນຮອດຊ່ວງເຂົ້າໂຮງຮຽນ

**ຄອບຄົວຂອງຂ້າພະເຈົ້າອາດຈະໄດ້ຮັບການສະໜັບສະໜູນຫຍັງແດ່ເມື່ອລູກຂອງຂ້າພະເຈົ້າອາຍຸຄົບ 3 ປີ?**
ບໍລິການ Early Start ສິ້ນສຸດເມື່ອອາຍຸຄົບ 3 ປີ. ສິ່ງນີ້ເອີ້ນວ່າການປ່ຽນຜ່ານ. ເຖິງແມ່ນວ່າການປ່ຽນຜ່ານຈະເກີດຂຶ້ນເມື່ອອາຍຸ 3 ປີ ທ່ານ ແລະຜູ້ປະສານງານບໍລິການຂອງທ່ານຈະເລີ່ມກະກຽມສໍາລັບການປ່ຽນຜ່ານນັ້ນຢ່າງໜ້ອຍ 6 ເດືອນກ່ອນໜ້ານີ້. ບໍລິການຕ່າງໆທີ່ຈັດຫາໃຫ້ຜ່ານສູນເຣຈິນັລເອີ້ນວ່າບໍລິການ Lanterman Act ຫຼື ບາງຄັ້ງເອີ້ນວ່າບໍລິການ Lanterman.

ຂ້າງລຸ່ມນີ້ທ່ານຈະເຫັນຂັ້ນຕອນທີ່ແຕກຕ່າງກັນເພື່ອກະກຽມຄວາມພ້ອມຂອງທ່ານສໍາລັບການເດີນທາງຜ່ານບໍລິການ Early Start ແລະຂັ້ນຕອນຕໍ່ໆໄປ. ບໍລິການເຫຼົ່ານີ້ຫຼາຍຢ່າງຕ້ອງມີການປະເມີນຜົນເພື່ອເບິ່ງວ່າລູກຂອງທ່ານມີຄຸນສົມບັດ ຫຼື ບໍ່.

| ຂັ້ນຕອນໃນຊີວິດ | ແຮກເກີດເຖິງອາຍຸ 3 ປີ *(ບໍລິການ Early Start)* | ແຮກເກີດເຖິງອາຍຸ 5 ປີ *(ການມີສິດຊົ່ວຄາວ)* | ອາຍຸ 3 ເຖິງ 22 ປີ *(ໄວລຸ້ນ ແລະໄວໜຸ່ມ)* |
|---|---|---|---|
| **ຈັດຫາໃຫ້ຜ່ານລະບົບການສຶກສາ** | ບໍລິການ Early Start | ບໍລິການ Early Start ແລະ/ຫຼື ການສຶກສາພິເສດ/ການສຶກສາ Early | ການສຶກສາພິເສດ/ການສຶກສາທົ່ວໄປ (K-12) |
| **ຈັດຫາໃຫ້ຜ່ານລະບົບສູນເຣຈິນັລ** | ບໍລິການ Early Start, ການມີສິດຊົ່ວຄາວ ຫຼື ບໍລິການ Lanterman* | ການມີສິດຊົ່ວຄາວ ຫຼື ບໍລິການ Lanterman* | ບໍລິການ Lanterman* |

** ລູກຂອງທ່ານອາດມີສິດໄດ້ຮັບບໍລິການ Lanterman ໃນທຸກຊ່ວງອາຍຸ ແລະບໍລິການຈະດໍາເນີນຕໍ່ໄປຕະຫຼອດຊີວິດ.*
*[ເບິ່ງຄໍາສັບສໍາລັບຄໍານິຍາມ]*

**ຂ້າພະເຈົ້າຈະວາງແຜນການປ່ຽນຜ່ານອອກຈາກບໍລິການ Early Start ໄດ້ແນວໃດ?**
ຢ່າງໜ້ອຍ 90 ວັນກ່ອນທີ່ລູກຂອງທ່ານຈະມີອາຍຸຄົບ 3 ປີ ທ່ານ ແລະຜູ້ປະສານງານບໍລິການຂອງທ່ານຈະຕ້ອງພົບກັບເຈົ້າໜ້າທີ່ຈາກເຂດການສຶກສາຂອງລູກທ່ານເພື່ອຈັດທໍາແຜນການປ່ຽນຜ່ານຮ່ວມກັນ. ເຊິ່ງເອີ້ນວ່າການປະຊຸມວາງແຜນການປ່ຽນຜ່ານ. ແຜນນີ້ຈະປະກອບດ້ວຍ:

- ຂັ້ນຕອນໃນການໄດ້ຮັບການບໍລິການການສຶກສາພິເສດ ຖ້າຈໍາເປັນ
- ຂັ້ນຕອນທີ່ຈໍາເປັນຕ້ອງເກີດຂຶ້ນເພື່ອພິຈາລະນາສິດໃນການໄດ້ຮັບບໍລິການ Lanterman ແລະ/ຫຼື
- ຖ້າລູກຂອງທ່ານມີສິດໄດ້ຮັບການບໍລິການອື່ນໆຈາກລັດ ເຊັ່ນ
    - ໂຄງການໃນຊຸມຊົນທ້ອງຖິ່ນ (Head Start, First 5, Help Me Grow ແລະອື່ນໆ)
    - ປະກັນສຸຂະພາບ

- ໄດ້ຮັບເງິນທຶນຈາກພາກເອກະຊົນ

ເດັກນ້ອຍບາງຄົນຈະຍັງຄົງມີສິດໄດ້ຮັບບໍລິການຈາກສູນເຣຈິນັລ ແຕ່ບາງຄົນຈະບໍ່ມີສິດ.

ເມື່ອອາຍຸ 3 ປີ ລູກຂອງທ່ານອາດຈະຢູ່ໃນເສັ້ນທາງໃດເສັ້ນທາງໜຶ່ງຈາກສາມເສັ້ນທາງເຫຼົ່ານີ້:

| | | |
|---|---|---|
| ມີສິດໄດ້ຮັບບໍລິການຈາກທັງສູນເຣຈິນັລ ແລະບໍລິການການສຶກສາພິເສດ | ມີສິດໄດ້ຮັບບໍລິການການສຶກສາພິເສດເທົ່ານັ້ນ | ບໍ່ມີສິດໄດ້ຮັບບໍລິການຈາກສູນເຣຈິນັລ ຫຼື ບໍລິການການສຶກສາພິເສດ. |

**ມີສິດໄດ້ຮັບບໍລິການຈາກທັງສູນເຣຈິນັລ ແລະບໍລິການການສຶກສາພິເສດ:**
ລູກຂອງທ່ານອາດຈະມີສິດໄດ້ຮັບບໍລິການຈາກທັງສູນເຣຈິນັລ ແລະບໍລິການການສຶກສາພິເສດຈາກເຂດການສຶກສາ. ໂຮງຮຽນໃຫ້ບໍລິການເພື່ອປະໂຫຍດທາງການສຶກສາເທົ່ານັ້ນ. ສູນເຣຈິນັລຈັດໃຫ້ມີບໍລິການເພື່ອສະໜັບສະໜູນການມີສ່ວນຮ່ວມຂອງຊີວິດບຸກຄົນໃນບ້ານແລະໃນຊຸມຊົນ. ຖ້າເປັນເຊັ່ນນັ້ນ ລູກຂອງທ່ານຈະມີແຜນສອງຢ່າງໃນຂະນະນີ້ຄື ແຜນການສຶກສາສະເພາະບຸກຄົນ (IEP) ສໍາລັບໂຮງຮຽນ ແລະແຜນໂປແກມສະເພາະບຸກຄົນ (IPP) ສໍາລັບສູນເຣຈິນັລ.

- ເດັກນ້ອຍບາງຄົນອາດຈະບໍ່ມີຄຸນສົມບັດຕາມເກນໃນການໄດ້ຮັບບໍລິການຢ່າງຈະແຈ້ງໃນບໍລິການຈາກສູນເຣຈິນັລເມື່ອອາຍຸ 3 ປີ ແຕ່ອາດຈະມີສິດໄດ້ຮັບບໍລິການຈາກສູນເຣຈິນັລພາຍໃຕ້ການມີສິດຊົ່ວຄາວໄດ້.

**ມີສິດໄດ້ຮັບບໍລິການການສຶກສາພິເສດເທົ່ານັ້ນ:**
ລູກຂອງທ່ານອາດຈະມີສິດໄດ້ຮັບບໍລິການການສຶກສາພິເສດ ແຕ່ບໍ່ມີສິດໄດ້ຮັບບໍລິການຈາກສູນເຣຈິນັລ ເນື່ອງຈາກລູກຂອງທ່ານບໍ່ມີສິດໄດ້ຮັບບໍລິການ Lanterman ຫຼື ການມີສິດຊົ່ວຄາວ.ຖ້າເປັນເຊັ່ນນັ້ນ ບໍລິການສໍາລັບລູກຂອງທ່ານຈະໄດ້ຮັບການວາງແຜນໄວ້ໃນການປະຊຸມ IEP. ສິ່ງນີ້ຈະເກີດຂຶ້ນປະມານຊ່ວງວັນເກີດປີທີສາມຂອງລູກຂອງທ່ານ.

**ບໍ່ມີສິດໄດ້ຮັບບໍລິການຈາກສູນເຣຈິນັລ ຫຼື ບໍລິການການສຶກສາພິເສດ:**
ລູກຂອງທ່ານອາດຈະບໍ່ມີຄວາມລ່າຊ້າດ້ານພັດທະນາການ ຫຼື ມີຄວາມພິການ ເນື່ອງຈາກເຂົາເຈົ້າໄດ້ພັດທະນາຕາມທັນເດັກນ້ອຍຄົນອື່ນໆໃນໄວດຽວກັນແລ້ວ. ຖ້າລູກຂອງທ່ານຍັງຕ້ອງການຄວາມຊ່ວຍເຫຼືອ ແຕ່ຄວາມຕ້ອງການຂອງເຂົາເຈົ້າຍັງບໍ່ມີໄນຍະສໍາຄັນພຽງພໍທີ່ຈະມີສິດໄດ້ຮັບບໍລິການຊົ່ວຄາວ, ບໍລິການ Lanterman ຫຼື ການສຶກສາພິເສດ ຜູ້ປະສານງານບໍລິການຂອງທ່ານສາມາດຊ່ວຍໃຫ້ທ່ານຄົ້ນຫາແຫຼ່ງຊັບພະຍາກອນໃນຊຸມຊົນຂອງທ່ານເພື່ອສະໜັບສະໜູນຄວາມຈໍາເປັນດ້ານພັດທະນາການຂອງລູກຂອງທ່ານໄດ້.

ບໍ່ວ່າຈະເລືອກເສັ້ນທາງໃດເສັ້ນທາງໜຶ່ງເຫຼົ່ານີ້ ລູກຂອງທ່ານກໍ່ສາມາດຮັບບໍລິການຈາກແຫຼ່ງຊັບພະຍາກອນອື່ນໆ ແລະເຂົ້າຮ່ວມໂຄງການໃນຊຸມຊົນທ້ອງຖິ່ນໃນໄດ້ເວລາດຽວກັນ ຮ່ວມກັບໝູ່ເພື່ອນຂອງເຂົາເຈົ້າທີ່ມີ ແລະບໍ່ມີຄວາມພິການກໍ່ໄດ້. ຜູ້ປະສານງານບໍລິການຂອງທ່ານຈະຊ່ວຍທ່ານຊອກຫາ ແລະເຂົ້າເຖິງໂຄງການເຫຼົ່ານີ້ເມື່ອທ່ານພັດທະນາແຜນການປ່ຽນຜ່ານຂອງທ່ານ.

ທ່ານສາມາດເບິ່ງ <u>ວິດີໂອສັ້ນທີ່ອະທິບາຍກະບວນການຮັບເຂົ້າ</u> ເອີ້ນວ່າ Story of Max.

# ພາກສ່ວນທີ່ 5: ຮູ້ຈັກສິດທິຂອງທ່ານ

**<u>ສິດທິຂອງຂ້າພະເຈົ້າໃນຖານະທີ່ເປັນພໍ່ແມ່ ຫຼື ຜູ້ດູແລແມ່ນຫຍັງ?</u>**
ໃນຖານະທີ່ເປັນພໍ່ແມ່ ທ່ານມີສິດໃນລະບົບສູນເຣຈີນັລ ເຊິ່ງປະກອບດ້ວຍ:

1. ການປະເມີນ ແລະ ການປະເມີນຜົນ
2. ແຜນການບໍລິການຄອບຄົວສະເພາະບຸກຄົນ
3. ການຮັກສາຄວາມລັບ ແລະ ການເຂົ້າເຖິງບັນທຶກ
4. ໜັງສືແຈ້ງການເປັນລາຍລັກອັກສອນລ່ວງໜ້າ ຫຼື ໜັງສືແຈ້ງການດຳເນີນການ
5. ການບໍ່ຕົກລົງເຫັນດີກັບສູນເຣຈີນັລ

<u>ການປະເມີນ ແລະ ການປະເມີນຜົນ</u>
ທ່ານມີສິດທີ່ຈະ:

- ການຮ້ອງຂໍການປະເມີນສຳລັບລູກຂອງທ່ານ
- ໃຫ້ມີການອະທິບາຍຂັ້ນຕອນການປະເມີນໃຫ້ທ່ານຮູ້
- ການໃຫ້ຄຳຍິນຍອມໃນການປະເມີນ
- ການປະຕິເສດທີ່ຈະໃຫ້ມີການປະເມີນ
- ມີສ່ວນຮ່ວມໃນການປະເມີນລູກຂອງທ່ານ
- ເປັນສ່ວນໜຶ່ງຂອງການສົນທະນາກ່ຽວກັບສິດ ແລະ/ຫຼື ບໍລິການຂອງລູກຂອງທ່ານ

ນອກຈາກນັ້ນ ການປະເມີນຈະຕ້ອງ:

- ເປັນພາສາທີ່ທ່ານເລືອກ ເມື່ອໃດກໍ່ຕາມທີ່ເປັນໄປໄດ້
- ເໝາະສົມກັບລູກຂອງທ່ານ
- ດຳເນີນການໂດຍຜູ້ຊ່ຽວຊານທີ່ຜ່ານການຮັບຮອງໃຫ້ເຮັດການປະເມີນນັ້ນ
- ດຳເນີນການໃນສະຖານທີ່ທີ່ລູກຂອງທ່ານຄຸ້ນເຄີຍ
- ລວມເຖິງການກວດສອບບັນທຶກແລະບົດລາຍງານການປະເມີນອື່ນໆ
- ຄອບຄຸມພັດທະນາການທຸກດ້ານ

*"ຄົງຈະດີບໍ່ໜ້ອຍຖ້າເຮົາຮູ້ວ່າພວກເຮົາມີສິດທີ່ຈະໄດ້ຮັບຂໍ້ມູນນີ້ ຂໍ້ມູນດັ່ງກ່າວມີໄວ້ສຳລັບພວກເຮົາ ສາມາດເຂົ້າເຖິງໄດ້ໂດຍທຸກວິທີ, ຮູບແບບ ຫຼື ຮູບໃດໆກໍ່ໄດ້ ແລະຄວນຈະສາມາດເຂົ້າໃຈໄດ້ງ່າຍສຳລັບພວກເຮົາທຸກຄົນ."*
– □□□□□□

ແຜນບໍລິການຄອບຄົວສະເພາະບຸກຄົນ (IFSP)

ທ່ານເປັນສະມາຊິກທີ່ເທົ່າທຽມກັນ ແລະມີຄຸນຄ່າຂອງທີມ IFSP ຂອງລູກທ່ານ.  ເຊິ່ງໝາຍຄວາມວ່າທ່ານມີສິດທີ່ຈະ:

- ເຂົ້າຮ່ວມການປະຊຸມ IFSP ແລະຊ່ວຍພັດທະນາເອກະສານ IFSP
    - ການປະຊຸມ IFSP ບໍ່ສາມາດເກີດຂຶ້ນໄດ້ຖ້າບໍ່ມີທ່ານ
- ເຊີນບຸກຄົນອື່ນເຂົ້າຮ່ວມການປະຊຸມ ເຊັ່ນ ສະມາຊິກຄົນອື່ນໆໃນຄອບຄົວ, ໝູ່ເພື່ອນ, ຜູ້ໃຫ້ບໍລິການ ແລະຜູ້ສະໜັບສະໜູນ ແລະອື່ນໆ.
- ຄຳຍິນຍອມໃນ IFSP
    - ບໍລິການຕ່າງໆຈະບໍ່ສາມາດເລີ່ມຕົ້ນໄດ້ໂດຍບໍ່ໄດ້ຮັບຄຳຍິນຍອມເປັນລາຍລັກອັກສອນຈາກທ່ານ
    - ທ່ານມີສິດທີ່ຈະປະຕິເສດ ຫຼື ປ່ຽນໃຈໄດ້ເຊັ່ນກັນ
- ໃຫ້ບໍລິການໃນ "ສະພາບແວດລ້ອມຕາມທຳມະຊາດ" – ສະຖານທີ່ທີ່ລູກຂອງທ່ານຄຸ້ນເຄີຍ ເຊັ່ນ ເຮືອນຂອງທ່ານ
    - ຖ້າບໍ່ສາມາດໃຫ້ບໍລິການໃນສະພາບແວດລ້ອມຕາມທຳມະຊາດ ຈະຕ້ອງແຈ້ງໃຫ້ທ່ານຮູ້ວ່າເນື່ອງຈາກສາເຫດຫຍັງ
    - ທ່ານສາມາດຮັບບໍລິການຜ່ານການສື່ສານທາງເອເລັກໂຕຣນິກໄລຍະໄກ ເຊັ່ນ ການໂທວິດີໂອທາງໄກ (ເຊັ່ນ Zoom ຫຼື Skype)
- ແບ່ງປັນ IFSP ຂອງລູກຂອງທ່ານກັບອົງກອນອື່ນ ໂດຍຕ້ອງໄດ້ຮັບອະນຸຍາດແລະຄຳຍິນຍອມຈາກທ່ານເທົ່ານັ້ນ.
- ໄດ້ຮັບ "ໜັງສືແຈ້ງການດຳເນີນການ"
    - ເຊິ່ງໝາຍຄວາມວ່າທ່ານຈະໄດ້ຮັບໜັງສືແຈ້ງການລ່ວງໜ້າເປັນລາຍລັກອັກສອນ ຖ້າສູນເຣຈິນັລປະຕິເສດ ຫຼື ປ່ຽນແປງບໍລິການ
- ມີການອະທິບາຍ ຫຼື ແປເອກະສານ IFSP ເປັນພາສາທີ່ທ່ານເລືອກ ເມື່ອໃດກໍ່ຕາມທີ່ເປັນໄປໄດ້
    - ທ່ານສາມາດຮ້ອງຂໍໃຫ້ມີການແປເອກະສານແປເປັນພາສາທີ່ທ່ານຕ້ອງການ ແລະ/ຫຼື ມີນາຍແປພາສາເຂົ້າຮ່ວມໃນການປະຊຸມທົບທວນໄດ້



ການຮັກສາຄວາມລັບ ແລະການເຂົ້າເຖິງບັນທຶກ

ບັນທຶກຂອງສູນເຣຈິນັລຂອງລູກຂອງທ່ານຖືວ່າເປັນຄວາມລັບ ແລະຕ້ອງເກັບໄວ້ເປັນສ່ວນຕົວ. ນີ້ແມ່ນສ່ວນໜຶ່ງຂອງກົດໝາຍທີ່ເອີ້ນວ່າກົດໝາຍວ່າດ້ວຍສິດທິໃນການສຶກສາ ແລະຄວາມເປັນສ່ວນຕົວຂອງຄອບຄົວ (FERPA). ບໍ່ສາມາດແບ່ງປັນບັນທຶກເຫຼົ່ານີ້ກັບບຸກຄົນໃດກໍ່ຕາມ ໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ. ທ່ານມີສິດທີ່ຈະໃຫ້ມີການອະທິບາຍກົດໝາຍນີ້ໃຫ້ທ່ານຟັງ.

ທ່ານສາມາດຮ້ອງຂໍສຳເນົາບັນທຶກຂອງລູກຂອງທ່ານຈາກຜູ້ປະສານງານບໍລິການ. ເປັນຄວາມຄິດທີ່ດີທີ່ຈະເຮັດສິ່ງນີ້ເປັນລາຍລັກອັກສອນ. ຖ້າທ່ານຮ້ອງຂໍບັນທຶກ ທ່ານຈະຕ້ອງໄດ້ຮັບສຳເນົາ**ພາຍໃນ 5 ວັນທຳການ**.

ທ່ານຍັງສາມາດຮ້ອງຂໍໃຫ້ມີການປະຊຸມກັບຜູ້ປະສານງານບໍລິການເພື່ອປຶກສາຫາລືກ່ຽວກັບບັນທຶກໄດ້. ຕ້ອງຈັດໃຫ້ມີການປະຊຸມດັ່ງກ່າວ**ພາຍໃນ 5 ວັນທຳການ**. ຖ້າທ່ານຮູ້ສຶກວ່າມີຂໍ້ມູນທີ່ບໍ່ຖືກຕ້ອງຢູ່ໃນບັນທຶກ ທ່ານມີສິດທີ່ຈະຮ້ອງຂໍໃຫ້ມີການປ່ຽນແປງຫຼື ລຶບອອກຂໍ້ມູນນັ້ນອອກ.



ໜັງສືແຈ້ງການເປັນລາຍລັກອັກສອນລ່ວງໜ້າ ຫຼື ໜັງສືແຈ້ງການດຳເນີນການ

ບາງຄັ້ງທ່ານ ແລະສູນເຣຈິນັລຂອງທ່ານອາດຈະມີຄຳຄິດເຫັນບໍ່ກົງກັນ. ຖ້າເກີດເຫດການດັ່ງກ່າວ ສູນເຣຈິນັລຈະຕ້ອງແຈ້ງໃຫ້ທ່ານຮູ້ລ່ວງໜ້າເປັນລາຍລັກອັກສອນ. ຕົວຢ່າງ ທ່ານແລະສູນເຣຈິນັລຂອງທ່ານອາດຈະມີຄຳຄິດເຫັນບໍ່ກົງກັນກ່ຽວກັບການມີສິດໄດ້ຮັບບໍລິການ Early Start ຂອງລູກຂອງທ່ານ ທ່ານແລະສູນເຣຈິນັລອາດຈະມີຄຳຄິດເຫັນບໍ່ກົງກັນກ່ຽວກັບປະເພດ ຫຼືຈຳນວນບໍລິການທີ່ລູກຂອງທ່ານໄດ້ຮັບ ຫຼື ກ່ຽວກັບສະຖານທີ່ໃຫ້ບໍລິການເຫຼົ່ານັ້ນ.

ໜັງສືແຈ້ງການດຳເນີນການຈະແຈ້ງໃຫ້ທ່ານຮູ້ວ່າສູນເຣຈິນັລຕ້ອງການເຮັດຫຍັງ. ໜັງສືແຈ້ງການຈະຕ້ອງແຈ້ງໃຫ້ທ່ານຮູ້ຕໍ່ໄປນີ້:

- ການດຳເນີນການທີ່ສູນເຣຈິນັລຈະດຳເນີນການ
- ວັນທີທີ່ຈະມີການດຳເນີນການ
- ເຫດຜົນໃນການຕັດສິນໃຈ ລວມທັງຂໍ້ເທັດຈິງ ແລະກົດໝາຍ ຫຼືນະໂຍບາຍທີ່ສະໜັບສະໜູນການຕັດສິນໃຈນັ້ນ

- ຂໍ້ມູນກ່ຽວກັບວິທີອຸທອນການຕັດສິນໃຈ

<u>ຄໍາຄິດເຫັນບໍ່ກົງກັນກັບສູນເຣຈິນັລ</u>
ເຖິງແມ່ນວ່າທ່ານ, ຜູ້ປະສານງານບໍລິການຂອງທ່ານ ແລະສູນເຣຈິນັລຈະເປັນທີມງານດຽວກັນ ອາດຈະມີບາງຄັ້ງທີ່ທ່ານບໍ່ເຫັນດີນໍາ. ເຊິ່ງອາດຈະເກີດຂຶ້ນຖ້າສູນເຣຈິນັລ:

- ລະບຸວ່າລູກຂອງທ່ານບໍ່ມີສິດໄດ້ຮັບບໍລິການ Early Start
- ແນະນໍາບໍລິການທີ່ທ່ານບໍ່ຕ້ອງການ ຫຼື ຄິດວ່າລູກຂອງທ່ານບໍ່ຈໍາເປັນ
- ປະຕິເສດ ຫຼື ບໍ່ຍອມໃຫ້ບໍລິການທີ່ທ່ານຕ້ອງການ ຫຼື ທີ່ທ່ານຄິດວ່າລູກຂອງທ່ານຈໍາເປັນ
- ຕ້ອງການປ່ຽນແປງ ຫຼື ຢຸດບໍລິການທີ່ທ່ານຄິດວ່າລູກຂອງທ່ານຈໍາເປັນ

ສູນເຣຈິນັລຈະຕ້ອງແຈ້ງລ່ວງໜ້າເປັນລາຍລັກອັກສອນເຖິງສິ່ງທີ່ເຂົາເຈົ້າຕ້ອງການດໍາເນີນການ. ຈາກນັ້ນທ່ານສາມາດເລືອກວິທີແກ້ໄຂຄໍາຄິດເຫັນທີ່ບໍ່ກົງກັນໄດ້.

ຫຼາຍຄັ້ງ ວິທີທີ່ດີທີ່ສຸດໃນການແກ້ໄຂຄໍາຄິດເຫັນທີ່ບໍ່ກົງກັນແມ່ນໂດຍການເວົ້າລົມກັບຜູ້ປະສານງານບໍລິການຂອງທ່ານ. ອາດຈະມີຄວາມເຂົ້າໃຈຜິດເກີດຂຶ້ນ ຫຼືທ່ານອາດຈະຕ້ອງການໃຫ້ຂໍ້ມູນໃໝ່ກ່ຽວກັບລູກຂອງທ່ານ. ຜູ້ປະສານງານບໍລິການຂອງທ່ານຍັງສາມາດຊ່ວຍໃຫ້ທ່ານເຂົ້າໃຈໄດ້ວ່າສູນເຣຈິນັລສາມາດແລະບໍ່ສາມາດໃຫ້ບໍລິການຫຍັງໄດ້. ເຖິງແມ່ນວ່າສິ່ງນີ້ບໍ່ຄວນເຮັດໃຫ້ເກີດຄວາມລ່າຊ້າໃນການໃຫ້ບໍລິການ ແຕ່ທ່ານອາດຈະຕ້ອງລອງຮັບບໍລິການທົ່ວໄປກ່ອນ. ນີ້ແມ່ນກໍລະນີທີ່ບໍລິການໄດ້ຮັບການຊໍາລະເງິນໂດຍລະບົບອື່ນ ເຊັ່ນ ປະກັນສຸຂະພາບຂອງທ່ານ ຫຼື ເຂດການສຶກສາ.

ຖ້າທ່ານບໍ່ຕ້ອງການເວົ້າລົມກັບຜູ້ປະສານງານບໍລິການຂອງທ່ານ ຫຼືການເວົ້າລົມບໍ່ໄດ້ຜົນ ທ່ານສາມາດເລືອກທາງເລືອກອື່ນໄດ້. ບໍລິການຂອງລູກທ່ານຈະສືບຕໍ່ໃນຂະນະທີ່ທ່ານກໍາລັງແກ້ໄຂຂໍ້ຂັດແຍ້ງຂອງທ່ານ. ເຊິ່ງເອີ້ນວ່າ "**ຍັງບໍ່ຕ້ອງປ່ຽນແປງຫຍັງ**". ທາງເລືອກຂອງທ່ານໃນການແກ້ໄຂຂໍ້ຂັດແຍ້ງ ລວມທັງທາງເລືອກທັງທີ່ບໍ່ເປັນທາງການແລະເປັນທາງການ.



<u>ທາງເລືອກທີ່ບໍ່ເປັນທາງການ</u>

- ການຂຽນ ຫຼື ການເວົ້າລົມກັບ ຫົວໜ້າຜູ້ປະສານງານບໍລິການຂອງທ່ານ, ຜູ້ຈັດການບໍລິການ Early Start ຫຼື ຜູ້ນໍາສູນເຣຈິນັລ

- ການອຸທອນການຕັດສິນໃຈ ຕໍ່ຜູ້ນໍາຂອງສູນເຣຈິນັລເພື່ອທົບທວນສະຖານະການແລະການກັບຄໍາຕັດສິນປະຕິເສດສິດ

<u>ທາງເລືອກທີ່ເປັນທາງການ:</u>

- ຮ້ອງຂໍໃຫ້ມີການປະຊຸມໄກ່ເກ່ຍ ໂດຍມີ ບຸກຄົນທີ່ເປັນກາງ ເອີ້ນວ່າ 'ຜູ້ໄກ່ເກ່ຍ' ຄອຍຊ່ວຍເຫຼືອທ່ານແລະສູນເຣຈິນັລໃຫ້ບັນລຸຂໍ້ຕົກລົງ. ການປະຊຸມການໄກ່ເກ່ຍຕ້ອງເກີດຂຶ້ນພາຍໃນ 30 ວັນນັບຈາກວັນທີ່ຮ້ອງຂໍການໄກ່ເກ່ຍ.
- ຮ້ອງຂໍໃຫ້ມີການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ ໂດຍທີ່ ທ່ານ ແລະສູນເຣຈິນັລຈະໄດ້ພົບກັບຜູ້ພິພາກສາທີ່ຈະຕັດສິນວ່າສູນເຣຈິນັລຄວນກັບຄໍາສິນໃຈຂອງເຂົາເຈົ້າ ຫຼື ບໍ່.
  - ຖ້າທ່ານຮ້ອງຂໍໃຫ້ມີການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ ຜູ້ພິພາກສາຈະຕ້ອງຕັດສິນພາຍໃນ 30 ວັນນັບຈາກວັນທີ່ທ່ານຍື່ນຄໍາຮ້ອງຂໍ
  - ທ່ານສາມາດຍື່ນຄໍາຮ້ອງຂໍການໄຕ່ສວນຕາມກະບວນການທີ່ຖືກຕ້ອງຕາມກົດໝາຍໄດ້ ແຕ່ທ່ານຍັງສາມາດຮ້ອງຂໍທາງເລືອກທີ່ບໍ່ເປັນທາງການ ຫຼື ການໄກ່ເກ່ຍໃນຂະນະທີ່ທ່ານກໍາລັງລໍຖ້າການໄຕ່ສວນໄດ້ເຊັ່ນກັນ.
  - ໃນບາງກໍລະນີ ທ່ານອາດຈະສາມາດແກ້ໄຂຂໍ້ຂັດແຍ້ງໄດ້ກ່ອນການໄຕ່ສວນ
  - ຖ້າທ່ານບໍ່ສາມາດບັນລຸຂໍ້ຕົກລົງກັບສູນເຣຈິນັລໄດ້ກ່ອນການໄຕ່ສວນ ກໍານົດເວລາຈະບໍ່ປ່ຽນແປງ
  - ທຸກສິ່ງທຸກຢ່າງຈະຕ້ອງເກີດຂຶ້ນພາຍໃນ 30 ວັນນັບຈາກວັນທີ່ທ່ານຍື່ນຄໍາຮ້ອງຂໍການໄຕ່ສວນຕາມຕາມກະບວນການທີ່ຖືກຕ້ອງຕາມກົດໝາຍ
- ຍື່ນຄໍາຮ້ອງຮຽນຕໍ່ລັດ ແລະຮ້ອງຂໍໃຫ້ DDS ທົບທວນສະຖານະການ ຖ້າທ່ານຄິດວ່າສູນເຣຈິນັລບໍ່ປະຕິບັດຕາມກົດໝາຍ.
  - ລັດມີເວລາ 60 ວັນໃນການກວດສອບຄໍາຮ້ອງຮຽນຂອງທ່ານ
  - ທ່ານສາມາດຮ້ອງຮຽນໄດ້ພາຍໃນ 1 ປີຫຼັງຈາກເກີດຂໍ້ຂັດແຍ້ງ (ໃນບາງກໍລະນີອາດດົນກວ່ານັ້ນ)
  - ຖ້າທ່ານຕ້ອງການຂໍເງິນຄືນສໍາລັບບໍລິການທີ່ຄວນຈະໄດ້ຮັບ ຫຼື ການດໍາເນີນການແກ້ໄຂ ທ່ານສາມາດຍື່ນຄໍາຮ້ອງຮຽນໄດ້ພາຍໃນ 3 ປີຫຼັງຈາກເກີດຂໍ້ຂັດແຍ້ງ.

*[ເບິ່ງຄໍາສັບສໍາລັບຄໍານິຍາມ]*




**ບຸກຄົນໃດສາມາດຊ່ວຍເຫຼືອຂ້າພະເຈົ້າໃນການອຸທອນ ຫຼື ການຮ້ອງຮຽນ?**

ເປັນຄວາມຄິດທີ່ດີທີ່ຈະເວົ້າລົມກັບຜູ້ສະໜັບສະໜູນ ຫຼື ທະນາຍຄວາມກ່ອນຈະຍື່ນຄຳຮ້ອງຮຽນ, ຄຳຮ້ອງຂໍການໄກ່ເກ່ຍ ຫຼື ຍື່ນຄຳຮ້ອງຂໍກະບວນການທີ່ຖືກຕ້ອງຕາມກົດໝາຍ. ມີອົງການທີ່ສາມາດຊ່ວຍໃຫ້ທ່ານເຂົ້າໃຈກົດໝາຍແລະສິດທິຂອງທ່ານ. ເຂົາເຈົ້າສາມາດເປັນຕົວແທນຕ່າງໜ້າໃຫ້ທ່ານໄດ້ເຊັ່ນກັນຖ້າຈຳເປັນ.

ເຫຼົ່ານີ້ແມ່ນອົງກອນບາງແຫ່ງທີ່ສາມາດຊ່ວຍເຫຼືອທ່ານໄດ້:

- ຫ້ອງການສົ່ງເສີມສິດທິລູກຄ້າ (OCRA): ນີ້ແມ່ນໂປແກມສິດທິຄົນພິການລັດຄາລິຟໍເນຍ. ເຂົາເຈົ້າສາມາດໃຫ້ຄຳແນະນຳດ້ານກົດໝາຍແລະການເປັນຕົວແທນຕ່າງໜ້າ. ມີທະນາຍຄວາມຂອງ OCRA ສຳລັບພື້ນທີ່ທາງພູມີສາດຂອງສູນເຣຈິນັລແຕ່ລະແຫ່ງ.

- ຫ້ອງການສິດທິຄົນພິການລັດຄາລິຟໍເນຍ (DRC): ນີ້ແມ່ນອົງກອນທີ່ໄດ້ຮັບການແຕ່ງຕັ້ງໂດຍລັດຖະບານກາງເພື່ອປົກປ້ອງ ແລະສົ່ງເສີມສິດທິຂອງຊາວຄາລິຟໍເນຍທີ່ມີຄວາມພິການ. ເຂົາເຈົ້າສາມາດຊ່ວຍໃຫ້ທ່ານເຂົ້າໃຈກົດໝາຍແລະສິດທິຂອງທ່ານ.

- [ສະພາຂອງລັດເພື່ອຄົນພິການດ້ານພັດທະນາການ (SCDD)](): ນີ້ແມ່ນໂຄງການທີ່ໄດ້ຮັບເງິນທຶນຂອງລັດຖະບານກາງທີ່ສະໜັບສະໜູນຄົນທີ່ມີຄວາມພິການ. ເຂົາເຈົ້າສາມາດຊ່ວຍໃຫ້ທ່ານຮຽນຮູ້ກ່ຽວກັບລະບົບສູນເຮຈິນັລ ແລະສາມາດສະໜັບສະໜູນບໍລິການຕ່າງໆ. ມີຫ້ອງການທ້ອງຖິ່ນ 13 ແຫ່ງໃນທົ່ວລັດຄາລິຟໍເນຍ.






# ພາກສ່ວນທີ່ 6: ຂໍ້ມູນການຕິດຕໍ່ ແລະແຫຼ່ງຊັບພະຍາກອນ

**ຂໍ້ມູນການຕິດຕໍ່**

ຖ້າຕ້ອງການຊອກຫາສູນເຣຈິນັລຂອງທ່ານ ໄປທີ່ ເວັບໄຊ DDS ແລະພິມລະຫັດໄປສະນີຂອງທ່ານໃນປ່ອງຄົ້ນຫາ. *ຖ້າຕ້ອງການຊອກຫາລະຫັດໄປສະນີຂອງ Los Angeles County ໃຫ້ກົດແຖບ 'LA County'.*

**ຂໍ້ມູນການຕິດຕໍ່ທີ່ສໍາຄັນ**

**ສູນເຣຈິນັລຂອງຂ້າພະເຈົ້າ**

ຊື່:

ໂທລະສັບ:

ອີເມວທົ່ວໄປ:

**ຜູ້ປະສານງານບໍລິການຂອງຂ້າພະເຈົ້າ**

ຊື່:

ໂທລະສັບ:

ອີເມວ:

**ຜູ້ຈັດການຂອງຜູ້ປະສານງານບໍລິການຂອງຂ້າພະເຈົ້າ**

ຊື່:

ໂທລະສັບ:

ອີເມວ:

**ສູນຊັບພະຍາກອນສໍາລັບຄອບຄົວໃນພື້ນທີ່ຂອງຂ້າພະເຈົ້າ**

ຊື່:

ໂທລະສັບ:

ອີເມວ:

ເວັບໄຊ:

**ພະແນກບໍລິການດ້ານພັດທະນາການ (DDS)**

ເວັບໄຊ DDS

ໜ້າຂໍ້ມູນ Early Start Information ຂອງເວັບໄຊ DDS

ສາຍດ່ວນຊ່ວຍເຫຼືອແອນ້ອຍ: 800-515-BABY (800-515-2229)

**ຫ້ອງການສົ່ງເສີມສິດທິລູກຄ້າ (OCRA)**

**ຫ້ອງການຂອງລັດ**

ເວັບໄຊ OCRA

ພາກເໜືອຂອງລັດຄາລິຟໍເນຍ: 800-390-7032 (TTY: 877-669-6023)

ພາກໃຕ້ຂອງລັດຄາລິຟໍເນຍ: 866-833-6712 (TTY: 877-669-6023)

**ຫ້ອງການສົ່ງເສີມສິດທິລູກຄ້າໃນພື້ນທີ່ຂອງຂ້າພະເຈົ້າ**

ໂທລະສັບ:

ອີເມວ:

**ສິດທິຄົນພິການລັດຄາລິຟໍເນຍ (DRC)**

[ເວັບໄຊ DRC]

ໂທລະສັບ: 800-776-5746

ໂທ TTY: 800-719-5798

**ສະພາຂອງລັດເພື່ອຄົນພິການດ້ານພັດທະນາການ (SCDD)**

[ເວັບໄຊ SCDD]

ໂທລະສັບ: (916) 263-7919

ໂທຟຣີ: (833) 818-9886

**ຫ້ອງການສະພາຂອງລັດເພື່ອຄົນພິການດ້ານພັດທະນາການໃນພື້ນທີ່ຂອງຂ້າພະເຈົ້າ**

ໂທລະສັບ:

ອີເມວ:

## ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບບໍລິການ Early Start

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ:**

| ລິງເຊື່ອມໂຍງໄປທີ່ແຫຼ່ງຊັບພະຍາກອນ | ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ໜ້າບໍລິການ Early Start ໃນເວັບໄຊ DDS | ພະແນກບໍລິການດ້ານພັດທະນາການ – □□□□□□□ Early Start<br><br>ໂທລະສັບ: 800-515-BABY<br><br>ອີເມວ: earlystart@dds.ca.gov | ແຫຼ່ງຂໍ້ມູນບໍລິການ Early Start ຈຳນວນຫຼາຍ ລວມທັງຄຳຖາມທີ່ມັກຖາມເລື້ອຍໆ (FAQs) ແລະເຄື່ອງມືຄົ້ນຫາສູນເຣຈິນັລເພື່ອຊອກຫາບໍລິການ Early Start ທີ່ຢູ່ໃກ້ທ່ານ. |
| ຄຳຖາມທີ່ມັກຖາມເລື້ອຍໆກ່ຽວກັບບໍລິການ Early Start | ພະແນກບໍລິການດ້ານພັດທະນາການ – □□□□□□□ Early Start | ຄຳຕອບສຳລັບຄຳຖາມທີ່ຖາມເລື້ອຍໆ (FAQs) ກ່ຽວກັບບໍລິການ Early Start |
| ເຫດຜົນໃນຄວາມກັງວົນວ່າລູກຂອງທ່ານ ຫຼື ເດັກນ້ອຍໃນການດູແລຂອງທ່ານອາດຈຳເປັນຕ້ອງໄດ້ຮັບຄວາມຊ່ວຍເຫຼືອພິເສດ | ພະແນກບໍລິການດ້ານພັດທະນາການຮ່ວມມືກັບພະແນກສຶກສາທິການລັດຄາລິຟໍເນຍ | ເອກະສານລາຍລະອຽດ 2 ໜ້າພ້ອມກັບຂໍ້ເທັດຈິງກ່ຽວກັບພັດທະນາການຂອງລູກຂອງທ່ານ |
| ໄດເລກະທໍລີການຂອງແຫຼ່ງຂໍ້ມູນບໍລິການ Early Start/Early Intervention | ເຄືອຂ່າຍຄວາມຊ່ວຍເຫຼືອທາງວິຊາການໃນການແຊກແຊງໃນໄລຍະເລີ່ມຕົ້ນຂອງລັດຄາລິຟໍເນຍ (CEITAN)<br><br>ໂທລະສັບ: 916-492-4012 | ລວມເຖິງຂໍ້ມູນກ່ຽວກັບສະຖານທີ່ຂໍຄວາມຊ່ວຍເຫຼືອ, ບຸກຄົນໃດທີ່ມີສິດ, ວິທີການສົ່ງຕົວໄປທີ່ຫາບໍລິການ Early Start ແລະໃຜເປັນຜູ້ໃຫ້ບໍລິການ Early Start |

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ ສືບຕໍ່:**

| ລິງເຊື່ອມໂຍງໄປທີ່ແຫຼ່ງຊັບພະຍາກອນ | ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ເວັບໄຊ Family Resource Centers Network of California | ເຄືອຂ່າຍສູນແຫຼ່ງຂໍ້ມູນສໍາລັບຄອບຄົວລັດຄາລິຟໍເນຍ<br>ໂທລະສັບ: 916-993-7781<br>ອີເມວ: info@frcnca.org | ລິງເຊື່ອມໂຍງໄປທີ່ສູນຊັບພະຍາກອນຄອບຄົວສໍາລັບບໍລິການ Early Start ທັງໝົດ 47 ແຫ່ງ ແລະຄໍາສັບຕ່າງໆ |
| ເວັບໄຊ ສິດທິຄົນພິການລັດຄາລິຟໍເນຍ | ສິດທິຄົນພິການລັດຄາລິຟໍເນຍ<br>ໂທລະສັບ: 800-776-5746<br>ໂທ TTY: 800-719-5798 | ຂໍ້ມູນກ່ຽວກັບສິດທິຂອງຄອບຄົວເມື່ອເຂົ້າເຖິງແລະໃຊ້ບໍລິການ Early Start ລວມທັງການມີສິດ ແລະການປ່ຽນຜ່ານ ແລະກົດໝາຍຂອງລັດກ່ຽວກັບວິທີໃຫ້ບໍລິການ Early Start |
| ຄູ່ມືແຫຼ່ງຊັບພະຍາກອນສໍາລັບພໍ່ແມ່ຂອງເດັກອ່ອນ ແລະເດັກນ້ອຍໄວຫັດເດີນທີ່ຫູໜວກ ຫຼື ມີບັນຫາດ້ານການໄດ້ຍິນ | ພະແນກສຶກສາທິການລັດຄາລິຟໍເນຍ | ບົດນໍາໂດຍຫຍໍ້ກ່ຽວກັບຄູ່ມືແຫຼ່ງຊັບພະຍາກອນສະບັບສົມບູນ ເຊິ່ງປະກອບດ້ວຍຂໍ້ມູນທີ່ຄອບຄຸມຈາກທັດສະນະຂອງພໍ່ແມ່ກ່ຽວກັບພາສາ, ເຄື່ອງມືສື່ສານ ແລະແນວທາງການສຶກສາທີ່ໃຊ້ໃນການສຶກສາສໍາລັບຄົນພິການດ້ານການໄດ້ຍິນ. |

**ແຫຼ່ງຊັບພະຍາກອນລະດັບຊາດ:**

| ແຫຼ່ງຊັບພະຍາກອນ | ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ສູນຂໍ້ມູນ ແລະແຫຼ່ງຊັບພະຍາກອນສໍາລັບພໍ່ແມ່: ຫ້ອງສະໝຸດແຫຼ່ງຊັບພະຍາກອນ | ສູນຂໍ້ມູນ ແລະຊັບພະຍາກອນສໍາລັບພໍ່ແມ່<br>ໂທລະສັບ: 973-642-8100 | ຂໍ້ມູນກ່ຽວກັບການແຊກແຊງໃນໄລຍະເລີ່ມຕົ້ນ ແລະການສຶກສາພິເສດທົ່ວທັງສະຫະລັດ ອາເມຣິກາ ແຕ່ບໍ່ສະເພາະເຈາະຈົງໃນລັດຄາລິຟໍເນຍ |

## ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການປ່ຽນຜ່ານຈາກບໍລິການ Early Start

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ:**

| ແຫຼ່ງຊັບພະຍາກອນ | ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ປື້ມຄູ່ມືກ່ຽວກັບການປ່ຽນຜ່ານຈາກບໍລິການການສຶກສາພິເສດໃນຊ່ວງປະຖົມໄວ | ພະແນກສຶກສາທິການລັດຄາລິຟໍເນຍ<br><br>ໂທລະສັບ: 916-319-0800 | ໃຫ້ຂໍ້ມູນ ແລະແຫຼ່ງຊັບພະຍາກອນເພື່ອນຳທາງໄປສູ່ການປ່ຽນຜ່ານຈາກບໍລິການ Early Start ໄປສູ່ບໍລິການການສຶກສາພິເສດໃນຊ່ວງປະຖົມໄວສຳລັບເດັກກ່ອນໄວຮຽນ |
| ການປ່ຽນຜ່ານໃນໄວເດັກທີ່ມີປະສິດທິຜົນ: ຄູ່ມືສຳລັບ ການປ່ຽນຜ່ານເມື່ອມີອາຍຸສາມປີ - ບໍລິການ Early Start ໄປສູ່ໄວອະນຸບານ | ພະແນກບໍລິການດ້ານພັດທະນາການ<br><br>ໂທລະສັບ: 800–515–BABY (800–515–2229)<br><br>ອີເມວ: earlystart@dds.ca.gov | ຄູ່ມືນີ້ລະບຸທັງອົງປະກອບທີ່ຈຳເປັນສຳລັບການປ່ຽນຜ່ານ ແລະແນວທາງປະຕິບັດທີ່ແນະນຳເພື່ອສະໜັບສະໜູນຄອບຄົວແລະລູກຂອງເຂົາເຈົ້າໃນຂະນະທີ່ເຂົາເຈົ້າປະສົບຄວາມສຳເລັດໃນການປ່ຽນຜ່ານຈາກບໍລິການ Early Start ໄປຫາບໍລິການອື່ນໆເມື່ອອາຍຸສາມປີ. |
| ວິດີໂອ: ການປ່ຽນຜ່ານອອກຈາກບໍລິການ Early Start: ຈາກ IFSP ໄປສູ່ IEP/IPP | ພໍ່ແມ່ຊ່ວຍເຫຼືອພໍ່ແມ່<br><br>ໂທລະສັບ: 855-727-5775 | ວິດີໂອກ່ຽວກັບການປ່ຽນຜ່ານຈາກບໍລິການ Early Start |
| ເອກະສານແຈກ: ການແຊກແຊງໃນໄລຍະເລີ່ມຕົ້ນ | ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ - ຫ້ອງການ San Bernardino<br><br>ໂທລະສັບ: 909 890-1259<br><br>ອີເມວ: sanbernardino@scdd.ca.gov | ເອກະສານແຈກທີ່ຄອບຄຸມຂະບວນການປ່ຽນຜ່ານ ແລະກຳນົດເວລາ |

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ ສືບຕໍ່:**

| ແຫຼ່ງຊັບພະຍາກອນ | ລິ້ງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ເວັບໄຊ First 5 California | ໂທລະສັບ: 916-263-1050<br><br>ອີເມວ: info@ccfc.ca.gov | First 5 California ມຸ່ງໝັ້ນທີ່ຈະປັບປຸງຊີວິດຂອງເດັກນ້ອຍໃນລັດຄາລິຟໍເນຍແລະຄອບຄົວຂອງເຂົາເຈົ້າຜ່ານລະບົບການສຶກສາ, ການບໍລິການສຸຂະພາບ, ການດູແລເດັກ ແລະໂຄງການທີ່ສຳຄັນອື່ນໆທີ່ຄອບຄຸມ. |
| ເວັບໄຊ 211 | ໂທລະສັບ: 211 | 2-1-1 ເປັນບໍລິການຂໍ້ມູນຟຣີ ແລະບໍລິການສົ່ງຕໍ່ທີ່ເຊື່ອມໂຍງຜູ້ຄົນກັບບໍລິການດ້ານສຸຂະພາບແລະມະນຸດໃນຊຸມຊົນຂອງເຂົາເຈົ້າຕະຫຼອດ 24 ຊົ່ວໂມງຕໍ່ວັນ 7 ວັນຕໍ່ອາທິດ. |

## ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເດັກໄວເຂົ້າຮຽນ ແລະການບໍລິການສຳລັບຜູ້ໃຫຍ່

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ:**

| ແຫຼ່ງຊັບພະຍາກອນ | ລິ້ງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ໜ້າເວັບການມີສ່ວນຮ່ວມຂອງຄອບຄົວ ແລະ ພັນທະມິດ | ພະແນກສຶກສາທິການລັດຄາລິຟໍເນຍ<br><br>ໂທລະສັບ: 916-319-0800 | ແຫຼ່ງຊັບພະຍາກອນ ແລະ ການສະໜັບສະໜູນພໍ່ແມ່, ຜູ້ປົກຄອງ ແລະ ຄອບຄົວຂອງເດັກທີ່ມີຄວາມພິການ |
| ຂໍ້ມູນກ່ຽວກັບສູນເຣຈິນັລໃນເວັບໄຊ DDS | ພະແນກບໍລິການດ້ານພັດທະນາການ<br><br>ໂທລະສັບ: 833-421-0061<br><br>ອີເມວ: info@dds.ca.gov<br><br>TTY: 711 | ຂໍ້ມູນກ່ຽວກັບສູນເຣຈິນັລ ແລະຂໍ້ມູນອື່ນໆກ່ຽວກັບຄວາມພິການດ້ານພັດທະນາການ |

## ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ ສືບຕໍ່:

| ແຫຼ່ງຊັບພະຍາກອນ | ລິ້ງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ຂໍ້ມູນການສຶກສາພິເສດໃນເວັບໄຊ DRC | ສິດທິຄົນພິການລັດຄາລິຟໍເນຍ (DRC)<br><br>ໂທລະສັບ: 800-776-5746<br><br>TTY: 800-719-5798 | ແຫຼ່ງຊັບພະຍາກອນທົ່ວໄປກ່ຽວກັບການສຶກສາພິເສດ |
| ຊອກຫາສູນສະໜັບສະໜູນພໍ່ແມ່ສຳລັບທ່ານໃນລັດຄາລິຟໍເນຍ | ສູນຂໍ້ມູນ ແລະຊັບພະຍາກອນສຳລັບພໍ່ແມ່<br><br>ໂທລະສັບ: 973-642-8100 | ລິ້ງເຊື່ອມໂຍງໄປທີ່ສູນຝຶກອົບຮົມ ແລະຂໍ້ມູນຂ່າວສານຂອງພໍ່ແມ່ (PTI) ແລະສູນຊັບພະຍາກອນພໍ່ແມ່ຊຸມຊົນ (CPRC). PTI ແລະ CPRC ໃຫ້ຂໍ້ມູນ, ແຫຼ່ງຊັບພະຍາກອນ ແລະການຝຶກອົບຮົມກ່ຽວກັບການສຶກສາພິເສດ (ລວມທັງບໍລິການ Early Start). ໃຊ້ລິ້ງເຊື່ອມໂຍງນີ້ເພື່ອຊອກຫາສູນທີ່ໃຫ້ບໍລິການໃນພື້ນທີ່ຂອງທ່ານ |

## ແຫຼ່ງຊັບພະຍາກອນລະດັບຊາດ:

| ແຫຼ່ງຊັບພະຍາກອນ | ລິ້ງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ໜ້າເວັບສຳລັບພໍ່ແມ່ ແລະຄອບຄົວ | ກະຊວງສຶກສາທິການສະຫະລັດອາເມຣິກາ<br><br>ໂທລະສັບ: 202-245-7459 | ແຫຼ່ງຊັບພະຍາກອນສຳລັບຄອບຄົວກ່ຽວກັບການສຶກສາພິເສດສຳລັບທົ່ວທັງສະຫະລັດ ອາເມຣິກາ ແຕ່ບໍ່ສະເພາະເຈາະຈົງໃນລັດຄາລິຟໍເນຍ |

## ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການດູແລສຸຂະພາບແລະສັງຄົມສົງເຄາະ

### ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ:

| ແຫຼ່ງຊັບພະຍາກອນ | ລິງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ໜ້າເວັບ Medi-Cal ສໍາລັບບຸກຄົນ | ພະແນກບໍລິການດູແລສຸຂະພາບ<br><br>ສາຍດ່ວນຊ່ວຍເຫຼືອ Medi-Cal: 800-541-5555<br><br>ໂທລະສັບ: 916-636-1980 | ຂໍ້ມູນກ່ຽວກັບ Medi-Cal |
| ເວັບໄຊພະແນກສັງຄົມສົງເຄາະ | ພະແນກສັງຄົມສົງເຄາະ<br><br>ໂທລະສັບ: 916-651-8848 | ຂໍ້ມູນກ່ຽວກັບການບໍລິການທີ່ຫຼາກຫຼາຍ ລວມທັງການບໍລິການສະໜັບສະໜູນໃນບ້ານ |

### ແຫຼ່ງຊັບພະຍາກອນລະດັບຊາດ:

| ແຫຼ່ງຊັບພະຍາກອນ | ລິງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ເວັບໄຊອົງກອນປະກັນສັງຄົມ (ລັດຖະບານກາງ). | ຫ້ອງການປະກັນສັງຄົມ<br><br>ໂທລະສັບ: 800-772-1213 | ຂໍ້ມູນກ່ຽວກັບລາຍໄດ້ເສີມປະກັນສັງຄົມ (SSI) ແລະປະກັນສັງຄົມ |

## ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານ

### ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ:

| ແຫຼ່ງຊັບພະຍາກອນ | ລິງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ໜ້າເວັບສິດທິຂອງພໍ່ແມ່ | ພະແນກສຶກສາທິການລັດຄາລິຟໍເນຍ<br><br>ໂທລະສັບ: 916-319-0800 | ຂໍ້ມູນກ່ຽວກັບສິດທິ ແລະການຄຸ້ມຄອງໂດຍກະບວນການສານປົກຄອງ |
| ສິດທິຂອງພໍ່ແມ່: ຄູ່ມືບໍລິການ Early Start ສໍາລັບຄອບຄົວ | ພະແນກບໍລິການດ້ານພັດທະນາການ<br><br>ໂທລະສັບ: 800–515–BABY (800–515–2229)<br><br>ອີເມວ: earlystart@dds.ca.gov | ຮວມເຖິງກົດໝາຍ ແລະກົດລະບຽບຂອງລັດ ແລະລັດຖະບານກາງທີ່ຄວບຄຸມບໍລິການ Early Start ໃນລັດຄາລິຟໍເນຍ |
| ໜ້າເວັບສິດທິ ແລະຄວາມຮັບຜິດຊອບໃນການສຶກສາພິເສດ (SERR). | ສິດທິຄົນພິການລັດຄາລິຟໍເນຍ (DRC)<br><br>ໂທລະສັບ: 800-776-5746<br><br>TTY: 800-719-5798 | ວິທີການມີສິດໄດ້ຮັບການສຶກສາພິເສດ, ວິທີການຮ້ອງຂໍແລະສະໜັບສະໜູນບໍລິການການສຶກສາພິເສດ ແລະສິ່ງທີ່ທ່ານຕ້ອງເຮັດຖ້າທ່ານບໍ່ເຫັນດີນໍາກັບເຂດການສຶກສາ. |
| ໜ້າເວັບສິດພາຍໃຕ້ກົດໝາຍ Lanterman Act (RULA). | ສິດທິຄົນພິການລັດຄາລິຟໍເນຍ (DRC)<br><br>ໂທລະສັບ: 800-776-5746<br><br>TTY: 800-719-5798 | ຊ່ວຍເຫຼືອໃນການທໍາຄວາມເຂົ້າໃຈສິດໃນການໄດ້ຮັບການສະໜັບສະໜູນແລະບໍລິການພາຍໃຕ້ກົດໝາຍ Lanterman, ສິດກັບສູນເຣຈີນັລແລະຜູ້ໃຫ້ບໍລິການ |

**ແຫຼ່ງຊັບພະຍາກອນຂອງລັດຄາລິຟໍເນຍ ສືບຕໍ່:**

| ແຫຼ່ງຊັບພະຍາກອນ | ລິງ ແລະ ຂໍ້ມູນການຕິດຕໍ່ | ຂ້າພະເຈົ້າຈະພົບຫຍັງຢູ່ນີ້? |
|---|---|---|
| ເວັບໄຊ State Council on Developmental Disabilities (SCDD). | ໂທລະສັບ: 916-263-7919<br><br>ໂທຟຣີ: 833-818-9886<br><br>council@scdd.ca.gov | SCDD<br>ໄດ້ຮັບການຈັດຕັ້ງຂຶ້ນໂດຍກົດໝາຍຂອງລັດແລະຂອງລັດຖະບານກາງໃນຖານະອົງກອນອິດສະຫຼະຂອງລັດ ເພື່ອໃຫ້ແນ່ໃຈວ່າບຸກຄົນທີ່ມີຄວາມພິການດ້ານພັດທະນາການແລະຄອບຄົວຂອງເຂົາເຈົ້າຈະໄດ້ຮັບບໍລິການແລະການສະໜັບສະໜູນທີ່ເຂົາເຈົ້າຈໍາເປັນ .  ຜ່ານການສະໜັບສະໜູນ, ການສ້າງຂີດຄວາມສາມາດ ແລະ ການປ່ຽນແປງໃນລະບົບ, SCDD ເຮັດວຽກເພື່ອບັນລຸລະບົບບໍລິການລາຍບຸກຄົນ ການສະໜັບສະໜູນ ແລະຄວາມຊ່ວຍເຫຼືອອື່ນໆທີ່ປັບໃຫ້ເໝາະສົມກັບຜູ້ບໍລິໂພກ ແລະຄອບຄົວ. |

# ຄຳສັບ

**ພາສາມືອາເມຣິກາ (ASL) (American Sign Language [ASL]):**
ASL ເປັນພາສາທີ່ມອງເຫັນດ້ວຍສາຍຕາທີ່ສະແດງອອກໂດຍການເຄື່ອນໄຫວຂອງມືແລະໃບໜ້າ.

**ເຕັກໂນໂລຊີຊ່ວຍເຫຼືອ (Assistive Technology):**
ລາຍການ, ອຸປະກອນ ຫຼືວິທີການໃດໆທີ່ໃຊ້ໃນການເພີ່ມ, ຮັກສາ ຫຼືປັບປຸງທັກສະຂອງເດັກນ້ອຍຫຼືຜູ້ໃຫຍ່ທີ່ມີຄວາມພິການ.

**ການປະເມີນໂສຕະວິທະຍາ (Audiology Evaluation):**
ການປະເມີນການໄດ້ຍິນໂດຍຜູ້ຊ່ຽວຊານດ້ານການໄດ້ຍິນ.

**ຜູ້ຊ່ຽວຊານດ້ານການໄດ້ຍິນ (ແພດດ້ານການໄດ້ຍິນ) (Audiologist [Hearing Doctor]):**
ຜູ້ຊ່ຽວຊານທີ່ໄດ້ຮັບການຝຶກອົບຮົມໃຫ້ເຂົ້າໃຈວິທີການເຮັດວຽກຂອງການໄດ້ຍິນ ແລະສາມາດວັດແທກການສູນເສຍການໄດ້ຍິນ ຫຼື ລະບຸບັນຫາການຊົງຕົວແລະເຮັດວຽກຮ່ວມກັບທ່ານເພື່ອແກ້ໄຂບັນຫາ.

**ອໍທິຊຶມ (ເອີ້ນອີກຢ່າງໜຶ່ງວ່າ ພາວະອໍທິຊຶມສະເປັກຕຣັມ ຫຼື ASD) (Autism [also called Autism Spectrum Disorder or ASD]):**
ຄວາມພິການດ້ານພັດທະນາການທີ່ສົ່ງຜົນຕໍ່ວິທີການທີ່ເດັກໂຕ້ຕອບກັບຜູ້ອື່ນ, ການສື່ສານ, ການຮຽນຮູ້ ແລະພຶດຕິກຳ.

**ຜູ້ສະໜັບສະໜູນ (Advocate):**
ຜູ້ສະໜັບສະໜູນແມ່ນຜູ້ທີ່ເປັນຕົວແທນຜົນປະໂຫຍດຂອງບຸກຄົນອື່ນ. ບຸກຄົນນີ້ສາມາດຊ່ວຍເຫຼືອ ແລະສະໜັບສະໜູນເມື່ອຈຳເປັນ ເຊັ່ນ ການເຂົ້າຮ່ວມການປະຊຸມ ຫຼືຂຽນຈົດໝາຍຮ້ອງຂໍຢ່າງເປັນທາງການ ລວມເຖິງໃຫ້ຄຳແນະນຳເຊັ່ນກັນ. ທຸກໆຄົນສາມາດເປັນຜູ້ສະໜັບສະໜູນໄດ້ ແຕ່ບຸກຄົນນີ້ບໍ່ແມ່ນທະນາຍຄວາມ ແລະບໍ່ສາມາດໃຫ້ຄຳແນະນຳດ້ານກົດໝາຍ.

**ການສະໜັບສະໜູນ (Advocacy):**
ການດຳເນີນການເພື່ອສະໜັບສະໜູນຜົນປະໂຫຍດແລະສິດທິຂອງເດັກນ້ອຍຫຼືຄອບຄົວ.

**ໂສຕະວິທະຍາ (Audiology):**
ການລະບຸແລະໃຫ້ບໍລິການສຳລັບເດັກນ້ອຍທີ່ມີການສູນເສຍການໄດ້ຍິນ ແລະການປ້ອງກັນການສູນເສຍການໄດ້ຍິນ.

**ມີຄວາມສ່ຽງ (At-Risk):**
ຄຳທີ່ໃຊ້ເອີ້ນເດັກນ້ອຍທີ່ໃນອະນາຄົດອາດຈະປະສົບບັນຫາດ້ານພັດທະນາການ ເຊິ່ງອາດຈະສົ່ງຜົນຕໍ່ການຮຽນຮູ້ແລະັດທະນາການໄດ້.

**ການປະເມີນຜົນ (Assessment)**:
ຂັ້ນຕອນເລີ່ມຕົ້ນ ແລະດໍາເນີນການຢ່າງຕໍ່ເນື່ອງທີ່ໃຊ້ໃນການລະບຸ:

- ຄວາມຈໍາເປັນ ແລະຈຸດແຂງທີ່ເປັນເອກະລັກສະເພາະຂອງເດັກ ແລະບໍລິການທີ່ເໝາະສົມເພື່ອຕອບສະໜອງຄວາມຈໍາເປັນເຫຼົ່ານັ້ນ.
- ຊັບພະຍາກອນ, ລໍາດັບຄວາມສໍາຄັນ ແລະຄວາມກັງວົນຂອງຄອບຄົວ ແລະການສະໜັບສະໜູນ ແລະບໍລິການທີ່ຈໍາເປັນໃນການເສີມສ້າງຂີດຄວາມສາມາດຂອງຄອບຄົວໃນການຕອບສະໜອງຄວາມຈໍາເປັນດ້ານພັດທະນາການຂອງເດັກອ່ອນ ຫຼື ເດັກໄວຫັດເດີນທີ່ມີຄວາມພິການ.

**ທີມງານປະເມີນຜົນ (Assessment Team)**:
ທີມງານທີ່ເກັບກໍາຂໍ້ມູນເພື່ອການຕັດສິນໃຈ.  ນອກຈາກພໍ່ແມ່ແລ້ວ ທີມງານນີ້ອາດຈະລວມເຖິງນັກຈິດຕະວິທະຍາ, ນັກບໍາບັດການປາກເວົ້າ, ນັກກິດຈະກໍາບໍາບັດ, ນັກກາຍະພາບບໍາບັດ, ພະຍາບານ ແລະ/ຫຼື ຄູສອນ.

**ພາວະສະໝອງພິການ (ຫຼື CP) (Cerebral palsy [or CP])**:
ຄວາມພິການດ້ານພັດທະນາການທີ່ສົ່ງຜົນຕໍ່ການເຄື່ອນໄຫວ, ການຊົງຕົວ ແລະການຄວບຄຸມກ້າມເນື້ອຂອງເດັກນ້ອຍ.

**ການດູແລເດັກ (Childcare)**:
ການດູແລເດັກນ້ອຍໃນຂະນະທີ່ພໍ່ແມ່ ຫຼືຜູ້ດູແລທີ່ເປັນຜູ້ໃຫຍ່ໄປເຮັດວຽກ, ຝຶກອົບຮົມ ຫຼືເຮັດສິ່ງອື່ນໆ.

**ຫ້ອງການບໍລິການເດັກນ້ອຍຂອງລັດຄາລິຟໍເນຍ (CCS) (California Children's Services [CCS])**:
ໂຄງການຂອງລັດສໍາລັບເດັກນ້ອຍທີ່ມີພະຍາດບາງຢ່າງ ຫຼື ບັນຫາສຸຂະພາບບາງຢ່າງ.  ເດັກນ້ອຍທີ່ມີອາຍຸບໍ່ເກີນ 21 ປີສາມາດຮັບການດູແລສຸຂະພາບແລະບໍລິການທີ່ເຂົາເຈົ້າຈໍາເປັນໄດ້ໂດຍຜ່ານໂຄງການນີ້.  CCS ຈະເຊື່ອມໂຍງທ່ານກັບແພດ ແລະບຸກຄະລາກອນທາງການແພດທີ່ໄດ້ຮັບການຝຶກອົບຮົມ ເຊິ່ງຮູ້ວິທດູແລລູກຂອງທ່ານທີ່ມີຄວາມຈໍາເປັນດ້ານການດູແລສຸຂະພາບພິເສດ.

**ຄໍາຍິນຍອມ (Consent)**:
ຄໍາອະນຸຍາດທີ່ພໍ່ແມ່ມອບໃຫ້ໂຄງການຫຼືອົງກອນ ໂດຍທົ່ວໄປຈະເປັນລາຍລັກອັກສອນ. ຄໍາຍິນຍອມແມ່ນເປັນຄວາມສະໝັກໃຈ ແລະພໍ່ແມ່ສາມາດຍົກເລີກໄດ້ທຸກເວລາ

**ການສື່ສານ (Communication)**:
ເປັນໄດ້ຫຼາຍກວ່າການປາກເວົ້າ! ເຊິ່ງເປັນຮູບແບບຂອງຂໍ້ຄວາມໃດໜຶ່ງທີ່ສົ່ງຈາກຝ່າຍຫນຶ່ງໄປຫາອີກຝ່າຍໜຶ່ງ ໂດຍຜ່ານສຽງ , ຄໍາເວົ້າ ຫຼື ສັນຍານທາງກາຍະພາບ ເຊັ່ນ ພາສາກາຍ.

**ການຮັກສາຄວາມລັບ (Confidentiality)**:
ສິດທີ່ຈະໄດ້ຮັບການເປີດເຜີຍຂໍ້ມູນສ່ວນບຸກຄົນກ່ຽວກັບເດັກນ້ອຍແລະຄອບຄົວໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ ຫຼື ເປີດເຜີຍໄດ້ສະເພາະເມື່ອໄດ້ຮັບອະນຸຍາດ ຫຼື ຕາມກົດໝາຍກໍານົດເທົ່ານັ້ນ. ຄວາມຍິນຍອມໃນການແບ່ງປັນຂໍ້ມູນຖືເປັນຄວາມສະໝັກໃຈ ແລະພໍ່ແມ່ສາມາດຍົກເລີກໄດ້ທຸກເວລາ.

**ພັດທະນາການ (Developmental)**:
ຂັ້ນຕອນ ຫຼືຂັ້ນ ຂັ້ນຕອນໃນການຈະເລີນເຕີບໂຕຂອງເດັກ.

**ຄວາມລ່າຊ້າດ້ານພັດທະນາການ (Developmental Delay)**:
ໝາຍເຖິງເດັກນ້ອຍທີ່ພັດທະນາທັກສະຕາມທີ່ຄາດຫວັງໄດ້ຊ້າກວ່າເດັກຄົນອື່ນໆໃນໄວດຽວກັນ.

**ປະຫວັດດ້ານພັດທະນາການ (Developmental History)**:
ເລື່ອງລາວກ່ຽວກັບຄວາມຄືບໜ້າຂອງເດັກນ້ອຍໃນການຮຽນຮູ້ຂະນະທີ່ເຂົາເຈົ້າເຕີບໂຕໃນດ້ານທັກສະຕ່າງໆ ເຊັ່ນ ການນັ່ງ, ການຍ່າງ ຫຼື ການປາກເວົ້າ.

**ທັກສະດ້ານພັດທະນາການທີ່ສຳຄັນ (Developmental Milestone Skills)**:
ທັກສະໂດຍທົ່ວໄປຈະໄດ້ຮັບການພັດທະນາໃນຊ່ວງໄວທີ່ສະເພາະເຈາະຈົງ.

**ການທົດສອບພັດທະນາການ (Developmental Tests)**:
ແບບທົດສອບທີ່ວັດແທກພັດທະນາການຂອງເດັກເມື່ອທຽບກັບພັດທະນາການຂອງເດັກນ້ອຍຄົນອື່ນໆໃນໄວດຽວກັນ.

**ຄວາມພິການ (Disability)**:
ຄວາມລ່າຊ້າດ້ານພັດທະນາການ ຫຼື ສະພາບຮ່າງກາຍ ຫຼືຈິດໃຈ
ເຊິ່ງມີແນວໂນ້ມສູງທີ່ຈະສົ່ງຜົນໃຫ້ເດັກມີຄວາມລ່າຊ້າດ້ານພັດທະນາການ.

**ການແຊກແຊງໃນໄລຍະເລີ່ມຕົ້ນ (Early Intervention)**:
ຊຸດບໍລິການ ແລະການສະໜັບສະໜູນທີ່ສົ່ງມອບໃຫ້ໄວທີ່ສຸດ ເພື່ອປ້ອງກັນບັນຫາໄລຍະຍາວ.

**ການມີສິດໄດ້ຮັບຄວາມຊ່ວຍເຫຼືອ (Eligibility)**:
ຂໍ້ກຳນົດທີ່ເດັກຕ້ອງປະຕິບັດຕາມເພື່ອໃຫ້ສາມາດຮັບບໍລິການຈາກໂຄງການໄດ້.

**ພະຍາດບ້າໝູ (Epilepsy)**:
ຄວາມພິການດ້ານການພັດທະນາທີ່ສົ່ງຜົນຕໍ່ການເຮັດວຽກຂອງສະໝອງແລະເຮັດໃຫ້ເກີດອາການຊັກ.

**ຄວາມສ່ຽງທີ່ກຳນົດ (Established Risk)**:
ຄຳສັບທີ່ໃຊ້ເອີ້ນເດັກທີ່ມີພາວະຜິດປົກກະຕິທີ່ບໍ່ຮູ້ສາເຫດທ ແລະອາດຈະມີບັນຫາດ້ານພັດທະນາການໃນອະນາຄົດ
ເຊິ່ງອາດຈະສົ່ງຜົນຕໍ່ການຮຽນຮູ້ແລະພັດທະນາການໄດ້.

**ການປະເມີນ (Evaluation)**:
ເກັບກຳຂໍ້ມູນກ່ຽວກັບຄວາມຈຳເປັນໃນການຮຽນຮູ້, ຈຸດແຂງ ແລະຄວາມສົນໃຈຂອງເດັກ.  ການປະເມີນເປັນສ່ວນໜຶ່
ງຂອງກະບວນການໃນການພິຈາລະນາວ່າເດັກນ້ອຍມີຄຸນສົມບັດສຳລັບໂຄງການ ຫຼື ການບໍລິການ ຫຼື ບໍ່.

**ການຝຶກອົບຮົມຄອບຄົວ, ການໃຫ້ຄຳປຶກສາ ແລະການຢ້ຽມຢາມເຮືອນ (Family Training, Counseling, and Home Visits)**:
ບໍລິການເພື່ອຊ່ວຍເຫຼືອຄອບຄົວຂອງເດັກອ່ອນ ຫຼືເດັກໃນໄວຫັດເດີນໃນການເຂົ້າໃຈເຖິງຄວາມຈຳເປັນໃນການດູແ
ລເດັກ ແລະສົ່ງເສີມພັດທະນາການຂອງເດັກ.

**ການປິ່ນປົວດ້ານການກິນອາຫານ (Feeding Therapy):**
ຊ່ວຍໃຫ້ເດັກນ້ອຍຮຽນຮູ້ວິທີກິນອາຫານ ຫຼືກິນອາຫານໄດ້ດີຂຶ້ນ ໂດຍສະເພາະເດັກອ່ອນ
ແລະເດັກນ້ອຍທີ່ມີບັນຫາໃນການກິນອາຫານ, ຄ້ຽວອາຫານ, ປ້ອນອາຫານ, ການດູດ ແລະການກືນອາຫານ.

**ນັກບໍາບັດດ້ານການກິນອາຫານ (Feeding Therapist):**
ໃຫ້ບໍລິການບໍາບັດດ້ານການກິນອາຫານ ແລະປົກກະຕິແລ້ວເປັນນັກອາຊີວະບໍາບັດ ຫຼື
ແພດບໍາບັດດ້ານການປາກເວົ້າແລະພາສາ.

**ການສະໜັບສະໜູນຄອບຄົວ (Family Support):**
ສິ່ງໃດກໍ່ໄດ້ທີ່ຊ່ວຍເຫຼືອຄອບຄົວໄດ້. ຄວາມຊ່ວຍເຫຼືອນີ້ອາດຈະລວມເຖິງຄໍາແນະນໍາ, ຂໍ້ມູນ
ຫຼືການຊ່ວຍໃຫ້ພໍ່ແມ່ເຂົ້າໃຈວ່າອາດຈະມີທາງເລືອກໃດແດ່ໃຫ້ເລືອກ.

**ສູນຊັບພະຍາກອນສໍາລັບຄອບຄົວ (Family Resource Center):**
ສະຖານທີ່ທີ່ຄອບຄົວຂອງເດັກນ້ອຍທີ່ມີຄວາມສ່ຽງ ຫຼືມີຄວາມລ່າຊ້າດ້ານພັດທະນາການ ຫຼືຄວາມພິການສາມາດຮັບ
ຂໍ້ມູນ, ການສະໜັບສະໜູນ ແລະຂໍ້ມູນຈາກພໍ່ແມ ແລະຄອບຄົວອື່ນໆ.

**ການເຄື່ອນໄຫວກ້າມເນື້ອມັດນ້ອຍ (Fine Motor):**
ໃນດ້ານພັດທະນາການທາງກາຍະພາບ ແມ່ນການໃຊ້ກ້າມເນື້ອມັດນ້ອຍຂອງຮ່າງກາຍ ໂດຍສ່ວນຫຼາຍແມ່ນມື/ນິ້ວມື.
ເຊັ່ນ ການບີບ, ການຍິບສິ່ງຂອງ, ການຖືສໍ ຫຼື ຕິດກະດຸມເຄື່ອງນຸ່ງຫົ່ມ.

**ບໍລິການ ແລະການສະໜັບສະໜູນທົ່ວໄປ (Generic Services and Supports):**
ຊັບພະຍາກອນທີ່ອາດມີໃຫ້ກັບເດັກນ້ອຍທຸກຄົນຈາກໜ່ວຍງານທ້ອງຖິ່ນ, ລັດ ແລະ/ຫຼື ລັດຖະບານກາງ.
ເຊິ່ງລວມເຖິງບໍລິການຕ່າງໆ ເຊັ່ນ Medi-Cal, ປະກັນສັງຄົມ ແລະໂປແກມການສຶກສາ ເຊັ່ນ Head Start.

**ທັກສະການເຄື່ອນໄຫວກ້າມເນື້ອມັດໃຫຍ່ (Gross Motor Skills):**
ການໃຊ້ກ້າມເນື້ອມັດໃຫຍ່ຂອງຮ່າງກາຍ, ແຂນ ຫຼືຂາ ເຊັ່ນ ການນັ່ງ, ການຍ່າງ, ການຊິງຕົວ ຫຼື ການຂວ້າງບານ.

**ບໍລິການສຸຂະພາບ (Health Services):**
ບໍລິການທີ່ກ່ຽວຂ້ອງກັບສຸຂະພາບ ແມ່ນບໍລິການທີ່ຈໍາເປັນເພື່ອໃຫ້ເດັກໄດ້ຮັບປະໂຫຍດຈາກບໍລິການແຊກແຊງ
ອື່ນໆໃນໄລຍະເລີ່ມຕົ້ນ.

**ບໍລິການຕາມບ້ານ (Home-based Service):**
ບໍລິການ ຫຼືການປິ່ນປົວໃດໆທີ່ຈັດຫາໃຫ້ຢູ່ເຮືອນ.

**ການຢ້ຽມຢາມເຮືອນ (Home Visits):**
ການຢ້ຽມຢາມເຮືອນຂອງທ່ານໂດຍຜູ້ຊ່ຽວຊານເພື່ອຈຸດປະສົງໃນການວາງແຜນແລະໃຫ້ບໍລິການ early
start/ການແຊກແຊງໃນໄລຍະເລີ່ມຕົ້ນ.

**ບໍລິການດ້ານພັດທະນາການສຳລັບເດັກແຮກເກີດ (Infant Development Services)**:
ບໍລິການແລະກິດຈະກຳທີ່ສົ່ງເສີມພັດທະນາການດ້ານທັກສະຕ່າງໆຂອງເດັກແຮກເກີດ ຫຼື
ເດັກໄວຫັດເດີນໃນການພັດທະນາຫຼາຍດ້ານ.

**IFSP (ແຜນການບໍລິການຄອບຄົວສະເພາະບຸກຄົນ) (IFSP [Individualized Family Service Plan])**:
ແຜນງານເປັນລາຍລັກອັກສອນສຳລັບການບໍລິການຂອງເດັກແລະຄອບຄົວທີ່ຄອບຄົວພັດທະນາກັບທີມງານ.

**ຄວາມພິການທາງສະຕິປັນຍາ (ຫຼື ID) (Intellectual disability [or ID])**:
ຄວາມພິການດ້ານພັດທະນາການທີ່ສົ່ງຜົນຕໍ່ຄວາມສາມາດໃນການຮຽນຮູ້ແລະການດຳເນີນຊີວິດປະຈຳວັນຂອ
ງເດັກນ້ອຍ (ດູແລຕົນເອງ).

**ແຜນການສຶກສາສະເພາະບຸກຄົນ (IEP) (Individualized Education Plan [IEP])**:
ແຜນທີ່ຂຽນເປັນລາຍລັກອັກສອນສຳລັບບໍລິການການສຶກສາພິເສດຂອງເດັກ.

**ເດັກອ່ອນ (Infant)**:
ເດັກໄວແຮກເກີດເຖິງອາຍຸໜຶ່ງປີ. ບາງຄັ້ງຖືວ່າຕັ້ງແຕ່ແຮກເກີດເຖິງອາຍຸເຖິງ 18 ເດືອນ ຫຼື
ຈົນກວ່າເດັກນ້ອຍຈະຍ່າງໄດ້ຈຶ່ງຈະເອີ້ນວ່າເດັກໄວຫັດເດີນ.

**ການພັກຜ່ອນຊົ່ວຄາວໄລຍະສັ້ນໃນເຮືອນ (In-Home Respite)**:
ໄດ້ຮັບການອອກແບບມາເພື່ອໃຫ້ຄອບຄົວໄດ້ພັກຈາກການດູແລເດັກ ແລະມີໃຫ້ສຳລັບບໍລິການໃນເຮືອນຂອງຄອບຄົວ.

**ບໍລິການນາຍພາສາ ແລະນັກແປ (Interpreter and Translator Services)**:
ອາດຈະໃຫ້ບໍລິການແປພາສາໃນການປະຊຸມ ແລະ/ຫຼືການແປການສື່ສານເປັນລາຍລັກອັກສອນ (IFSP)
ຈາກພາສາອັງກິດເປັນພາສາຫຼັກຂອງຄອບຄົວ.

**ການໄກ່ເກ່ຍ (Mediation)**:
ການປະຊຸມເພື່ອແກ້ໄຂຄວາມຂັດແຍ້ງລະຫວ່າງພໍ່ແມ່ (ທ່ານ) ແລະສູນເຣຈີນັລ.

**(Medi-Cal)**:
ໂຄງການດູແລສຸຂະພາບ Medicaid ຂອງຄາລິຟໍເນຍ. ໂຄງການນີ້ຈ່າຍຄ່າບໍລິການທາງການແພດຕ່າງໆ
ໃຫ້ກັບເດັກນ້ອຍແລະຜູ້ໃຫຍ່ທີ່ມີລາຍໄດ້ແລະຊັບພະຍາກອນຈຳກັດ ຫຼື ທີ່ມີສະຖານະການໃນຊີວິດທີ່ກຳນົດໄວ້. Medi-Cal
ໄດ້ຮັບການສະໜັບສະໜູນຈາກພາສີຂອງລັດຖະບານກາງ ແລະຂອງລັດ. ທ່ານສາມາດຍື່ນສະໝັກຂໍຮັບຄວາມຊ່ວຍເຫຼືອ
Medi-Cal ໂດຍບໍ່ຄຳນຶງເຖິງເພດ, ເຊື້ອຊາດ, ສາດສະໜາ, ສີຜິວ, ຊາດກຳເນີດ, ລົດນິຍົມທາງເພດ, ສະຖານະພາບການ
ແຕ່ງງານ, ອາຍຸ, ຄວາມພິການ ຫຼື ສະຖານະພາບນັກຮົບເກົ່າ. ຖ້າພົບວ່າ (ຫຼື ໄດ້ຮັບການພິຈາລະນາວ່າ) ທ່ານມີສິດ
ທ່ານຈະໄດ້ຮັບ Medi-Cal ຕາບໃດທີ່ທ່ານຍັງຄົງສືບຕໍ່ມີຄຸນສົມບັດຕາມຂໍ້ກຳນົດໃນການມີສິດໄດ້ຮັບຄວາມຊ່ວຍເຫຼືອ.

**ບໍລິການທາງການແພດ (ເພື່ອຈຸດປະສົງໃນການວິນິດໄສ/ການປະເມີນເທົ່ານັ້ນ) (Medical Services [for diagnostic/evaluation purposes only])**:
ການບໍລິການທີ່ໃຫ້ໂດຍແພດທີ່ມີໃບອະນຸຍາດເພື່ອຈຸດປະສົງໃນການວິນິດໄສ ຫຼື ການປະເມີນເພື່ອກຳນົດສະຖານະດ້ານພັດທະນາການຂອງເດັກ ແລະຈຳເປັນໃນການບໍລິການການແຊກແຊງໃນໄລຍະເລີ່ມຕົ້ນ.

**ພັດທະນາການດ້ານການເຄື່ອນໄຫວ (Motor Development)**:
ການພັດທະນາທັກສະການເຄື່ອນໄຫວ ຫຼື ທີ່ເອີ້ນວ່າທັກສະການເຄື່ອນໄຫວ ແມ່ນວິທີທີ່ເດັກພັດທະນາທັກສະທາງກາຍະພາບໃນການໃຊ້ຮ່າງກາຍແລະອະໄວຍະວະສ່ວນຕ່າງໆຂອງເຂົາເຈົ້າ.

**ທັກສະການເຄື່ອນໄຫວ (Motor Skills)**:
ຄວາມສາມາດໃນການເຄື່ອນໄຫວແລະການປະສານງານຂອງຮ່າງກາຍ. ທັກສະການເຄື່ອນໄຫວທີ່ເດັກນ້ອຍພັດທະນາມີສອງປະເພດໃຫຍ່ໆດັ່ງນີ້:
- ທັກສະການເຄື່ອນໄຫວກ້າມເນື້ອມັດນ້ອຍ ເຊັ່ນ ການຍິບແລະວາງສິ່ງຂອງ, ການຕົບມື, ການໃຊ້ສ້ອມແລະບ່ວງ, ການກິນອາຫານດ້ວຍຕົນເອງດ້ວຍນິ້ວມື.
- ທັກສະການເຄື່ອນໄຫວກ້າມເນື້ອມັດໃຫຍ່ ເຊັ່ນ ການຄານ, ການປີນປ່າຍ, ການເຕະ ແລະການກະໂດດ

**ສະພາບແວດລ້ອມຕາມທຳມະຊາດ (Natural Environment)**:
ສະຖານທີ່ ຫຼື ສະພາບແວດລ້ອມທີ່ເດັກນ້ອຍ ແລະຄອບຄົວຂອງລາວໄປໃນແຕ່ລະວັນ. ເຊິ່ງອາດຈະລວມເຖິງເຮືອນ, ໂຮງຮຽນອະນຸບານ ຫຼື ສະຖານທີ່ຊຸມຊົນອື່ນໆ ເຊັ່ນ ສວນສາທາລະນະ ຫຼື ຫ້ອງສະໝຸດທ້ອງຖິ່ນ.

**ບໍລິການທາງການພະຍາບານ (Nursing Services)**:
ການບໍລິການເພື່ອຊ່ວຍປ້ອງກັນບັນຫາສຸຂະພາບ ແລະສົ່ງເສີມສຸຂະພາບແລະພັດທະນາການ ແລະອາດຈະລວມເຖິງການບໍລິຫານຢາ ແລະການປິ່ນປົວຕາມທີ່ແພດສັ່ງ.

**ການບໍລິການດ້ານໂພຊະນາການ (ເບິ່ງການໃຫ້ອາຫານ) (Nutrition Services [see feeding])**:
ຊ່ວຍເຫຼືອໃນການພັດທະນາ ແລະ ຕິດຕາມແຜນທີ່ເໝາະສົມ ເພື່ອຕອບສະໜອງຄວາມຈຳເປັນດ້ານໂພຊະນາການຂອງເດັກ.

**ນັກອາຊີວະບຳບັດ (OT) (Occupational Therapist [OT])**:
ຜູ້ຊ່ຽວຊານດ້ານທັກສະການເຄື່ອນໄຫວກ້າມເນື້ອມັດນ້ອຍ, ການປະສານງານລະຫວ່າງຕາກັບມື, ການປະມວນຜົນທາງປະສາດສຳຜັດ, ປາກ, ແລະເວົ້າບໍ່ອອກ ແລະບັນຫາການກິນອາຫານ.

**ອາຊີວະບຳບັດ (Occupational Therapy)**:
ບໍລິການທີ່ໃຫ້ໂດຍນັກອາຊີວະບຳບັດທີ່ມີໃບອະນຸຍາດ ເຊິ່ງຊ່ວຍເຫຼືອເດັກນ້ອຍໃນກິດຈະກຳການເຄື່ອນໄຫວດ້ວຍກ້າມເນື້ອມັດນ້ອຍ ແລະວຽກງານປະຈຳວັນ ເຊັ່ນ ການກິນອາຫານ, ການແຕ່ງຕົວ ແລະການໃຊ້ມື.

**ການພັກຜ່ອນຊົ່ວຄາວໄລຍະສັ້ນນອກເຮືອນ (Out of Home Respite)**:
ການບໍລິການທີ່ຊ່ວຍໃຫ້ໄດ້ຢຸດພັກຜ່ອນຈາກການດູແລທີ່ເດັກຈຳເປັນ ແລະໃຫ້ບໍລິການນອກເຮືອນຂອງຄອບຄົວ.

**ໝູ່ເພື່ອໄວດຽວກັນ (Peers):**
ເດັກນ້ອຍອື່ນໆທີ່ມີອາຍຸເທົ່າກັນ ຫຼື ອາດຈະມີລະດັບພັດທະນາການເທົ່າກັນ.  ພວກເຂົາບໍ່ຈຳເປັນຕ້ອງເປັນໝູ່ເພື່ອນກັນສະເໝີໄປ.  ການຕິດຕໍ່ກັບໝູ່ເພື່ອໄວດຽວກັນເປັນສິ່ງສຳຄັນໃນການຮຽນຮູ້ທັກສະທາງສັງຄົມ ແລະການພັດທະນາທັກສະທາງ"ສັງຄົມຂອງເດັກນ້ອຍ.

**ບໍລິການດ້ານຈິດຕະວິທະຍາ (Psychological Services):**
ເມື່ອນັກຈິດຕະວິທະຍາປະເມີນ ຫຼື ທົດສອບພັດທະນາການຂອງເດັກ ແລະຕີຄວາມຜົນການທົດສອບ.

**ນັກກາຍະພາບບຳບັດ (PT) (Physical Therapist [PT]):**
ຜູ້ຊ່ຽວຊານດ້ານທັກສະການເຄື່ອນໄຫວກ້າມເນື້ອມັດໃຫຍ່ ໂດຍເນັ້ນທີ່ການເຄື່ອນໄຫວຮ່າງກາຍ ເຊັ່ນ ການກິ້ງ, ການຄານ, ການຍ່າງ, ແລະການປີນປ່າຍ. ເຂົາເຈົ້າຍັງສາມາດຊ່ວຍເຫລືອດ້ານການປະສານງານກ່ຽວກັບປະສາດຮັບຄວາມຮູ້ສຶກແລະການເຄື່ອນໄຫວເຊັ່ນກັນ.

**ກາຍະພາບບຳບັດ (Physical Therapy):**
ບໍລິການທີ່ໃຫ້ໂດຍນັກກາຍຍະພາບບຳບັດທີ່ມີໃບອະນຸຍາດ ເຊິ່ງຊ່ວຍເຫຼືອເດັກນ້ອຍໃນກິດຈະກຳການເຄື່ອນໄຫວພື້ນຖານ ແລະວຽກງານປະຈຳວັນ ເຊັ່ນ ການຄານ, ການຍ່າງ ແລະການກະໂດດ.  ເຂົາເຈົ້າຍັງສາມາດຊ່ວຍເຫລືອດ້ານການປະສານງານກ່ຽວກັບປະສາດຮັບຄວາມຮູ້ສຶກແລະການເຄື່ອນໄຫວເຊັ່ນກັນ.

**ຄວາມພິການທາງຮ່າງກາຍ (Physical Disability):**
ຄວາມພິການທີ່ສົ່ງຜົນຕໍ່ພັດທະນາການທາງດ້ານຮ່າງກາຍຂອງບຸກຄົນ.

**ການມີສິດຮັບສິດຊົ່ວຄາວ (Provisional Eligibility):**
ຖ້າເດັກນ້ອຍມີອາຍຸສາມຫຼືສີ່ປີ (ຫຼື ອາຍຸເຂົ້າໃກ້ສາມປີ) ແລະບໍ່ສະແດງອາການຜິດປົກກະຕິດ້ານພັດທະນາການ ການມີສິດຮັບສິດຊົ່ວຄາວແມ່ນມີຈຸດປະສົງເພື່ອຫຼີກເວັ້ນຄວາມລ່າຊ້າ ແລະຫຼຸດຜ່ອນຊ່ອງຫວ່າງໃນການບໍລິການຂອງສູນເຣຈິນັລທີ່ໃຫ້ແກ່ເດັກນ້ອຍໃນຊ່ວງທີ່ເປາະບາງເປັນພິເສດດ້ານພັດທະນາການຂອງເຂົາເຈົ້າ.

**ການປະສານງານບໍລິການ (ການຈັດການກໍລະນີ) (Service Coordination [Case Management]):**
ຜູ້ປະສານງານບໍລິການໃຫ້ຄວາມຊ່ວຍເຫຼືອ ແລະ ຊ່ວຍເຫຼືອເດັກອ່ອນ ຫຼື ເດັກໄວຫັດເດີນທີ່ມີຄວາມພິການ ແລະຄອບຄົວຂອງເດັກໃຫ້ໄດ້ຮັບບໍລິການທີ່ເຂົາເຈົ້າຈຳເປັນ.

**ບໍລິການພາສາມື ແລະພາສາໃບ້ (Sign Language and Cued Language Services):**
ບໍລິການເຫຼົ່ານີ້ໄດ້ແກ່ ການສອນພາສາມື, ພາສາໃບ້ ແລະພາສາສຽງ/ພາສາປາກເວົ້າ
ລວມເຖິງການໃຫ້ບໍລິການນາມພາສາມື ແລະພາສາໃບ້.

**ບໍລິການງານສັງຄົມສົງເຄາະ (Social Work Services):**
ໃຫ້ຄຳປຶກສາທັງແບບລາຍບຸກຄົນແລະແບບກຸ່ມຄອບຄົວກັບພໍ່ແມ່ ແລະສະມາຊິກຄົນອື່ນໆໃນຄອບຄົວ ແລະຈັດກິດຈະກຳສ້າງທັກສະທາງສັງຄົມທີ່ເໝາະສົມກັບແອນ້ອຍ ຫຼືເດັກນ້ອຍໄວຫັດເດີນແລະພໍ່ແມ່.

**ການຮຽນການສອນສະເພາະທາງ (Specialized Instruction):**
ການຮຽນຮູ້ໂດຍອີງໃສ່ການຫຼິ້ນ. ບົດຮຽນທີ່ອອກແບບມາໂດຍສະເພາະໄດ້ຮັບການວາງແຜນໂດຍຜູ້ຊ່ຽວຊານດ້ານເດັກອ່ອນ ເພື່ອສອນໃຫ້ທ່ານຮູ້ຈັກວິທີແນະນຳລູກຂອງທ່ານໃນປະສົບການການຮຽນຮູ້ທີ່ມ່ວນຊື່ນເພື່ອໃຫ້ບັນລຸເປົ້າໝາຍ.

**ຜູ້ຊ່ຽວຊານດ້ານການປາກເວົ້າແລະພາສາ (SLP) (Speech Language Pathologist [SLP]):**
ຜູ້ຊ່ຽວຊານດ້ານການສື່ສານແບບສະແດງອອກແລະແບບຮັບຮູ້ ສິ່ງທີ່ເດັກນ້ອຍເວົ້າ ຫຼື ເຮັດສັນຍານ ແລະສິ່ງທີ່ເດັກນ້ອຍເຂົ້າໃຈ.

**ການປິ່ນປົວການປາກເວົ້າ/ພາສາ (Speech/Language Therapy):**
ບໍລິການສະໜັບສະໜູນການພັດທະນາທັກສະການສື່ສານ. ເພື່ອຊ່ວຍໃຫ້ເດັກນ້ອຍພັດທະນາທັກສະການສື່ສານ ແລະທັກສະການເຮັດວຽກທາງສັງຄົມໂດຍນັກບຳບັດການປາກເວົ້າ ຫຼື ຜູ້ຊ່ວຍຜູ້ຊ່ຽວຊານດ້ານການປາກເວົ້າແລະພາສາ

**ການປິ່ນປົວ (Therapy):**
ສູນເຣຈິນັລສາມາດໃຫ້ການປິ່ນປົວສະເພາະສຳລັບຄວາມຈຳເປັນສະເພາະຂອງເດັກນ້ອຍໄດ້. ການປິ່ນປົວເຫຼົ່ານີ້ອາດຈະລວມເຖິງການອາຊີວະບຳບັດ, ກາຍະພາຍບຳບັດ ແລະການບຳບັດການປາກເວົ້າ.

**ການປ່ຽນຜ່ານ (Transition):**
ກະບວນການທີ່ເດັກນ້ອຍໃນໄວ 3 ປີຈະຍ້າຍຈາກບໍລິການ Early Intervention ໄປເປັນການສະໜັບສະໜູນ ຫຼື ບໍລິການອື່ນໆໃນຊ່ວງປະຖົມໄວ ເຊັ່ນ ໂຄງການການສຶກສາພິເສດກ່ອນໄວຮຽນ ຫຼື ໂຄງການໃນຊຸມຊົນ.

**ການເດີນທາງ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ (Transportation and Related Costs):**
ສູນເຣຈິນັລອາດຈະສະເໜີທາງເລືອກທີ່ຫຼາກຫຼາຍເພື່ອຊ່ວຍໃຫ້ຄອບຄົວເຂົ້າເຖິງຊຸມຊົນເມື່ອເຂົາເຈົ້າບໍ່ສາມາດເຮັດໄດ້ດ້ວຍຕົນເອງ.

**ຄວາມບົກຜ່ອງດ້ານການມອງເຫັນ (Vision Impairment):**
ການສູນເສຍການມອງເຫັນ ເຊິ່ງເຖິງແມ່ນວ່າມີການແກ້ໄຂແລ້ວກໍ່ສົ່ງຜົນຕໍ່ຄວາມສາມາດໃນການມອງເຫັນຂອງເດັກນ້ອຍ. ຄຳນີ້ຄອບຄຸມທັງການມອງເຫັນບໍ່ຊັດເຈນ ແລະການຕາບອດ.

**ບໍລິການດ້ານການມອງເຫັນ (Vision Services):**
ການປະເມີນແລະການວັດຜົນການເຮັດວຽກຂອງສາຍຕາ ລວມທັງການວິນິດໄສຄວາມຜິດປົກກະຕິທາງສາຍຕາ, ຄວາມລ່າຊ້າ ແລະຄວາມສາມາດສະເພາະທີ່ສົ່ງຜົນຕໍ່ພັດທະນາການຂອງເດັກໃນຊ່ວງປະຖົມໄວ.